ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

05-08 ສິງຫາ 2022
ປີທີ 11
ສະບັບທີ 865

## ຍົກສູງຂີດຄວາມສາມາດ ໃຫ້ແກ່ ສສຊ ແຂວງພາກກາງ ແລະ ພາກໃຕ້




(ສພຊ) ກອງປະຊຸມເຝິກອົບຮົມການຍົກສູງຂີດຄວາມສາມາດທາງດ້ານທັກສະການລົງພົບປະກັບປະຊາຊົນຜູ້ມີສິດເລືອກຕັ້ງ, ທັກສະການປະກອບຄຳເຫັນ ແລະ ຊັກຖາມ; ການຕິດຕາມກວດກາການປະຕິບັດບັນດາມະຕິຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ແລະການຕິດຕາມກວດກາການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 8 ເຂດເລືອກຕັ້ງ: ນະຄອນຫລວງວຽງຈັນ, ແຂວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ອັດຕະປື ແລະ ເຊກອງ ໄດ້ຈັດຂຶ້ນທີ່ແຂວງສະຫວັນນະເຂດ ໃນວັນທີ 1-2 ສິງຫາ 2022 ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ໂດຍການເຂົ້າຮ່ວມຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານ ສພຂ ສະຫວັນນະເຂດ, ມີປະທານ-ຮອງປະທານ ສພຂ ແລະ ສະ

ອ່ານຕໍ່ໜ້າ 2

## ຮຽບຮຽງກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ



(ສພຊ) ໂດຍໄດ້ສະໜັບສະໜູນການສະໜັບສະໜູນຈາກຄະນະເລຂາທິການສະພາແຫ່ງຊາດ ແລະ ແຜນງານການເຊກາ (CEGGA), ກອງປະຊຸມຮຽບຮຽງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງຂໍຄວາມເປັນທຳ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ (ສສຊ) ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຈັດຂຶ້ນໃນລະຫວ່າງວັນທີ 2-4 ສິງຫາ 2022 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ

ອ່ານຕໍ່ໜ້າ 2

## ຮອງປະທານ ສພຊ ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງເຊກອງ




(ສພຊ) ວັນທີ 3 ສິງຫາ 2022, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງ (ສພຂ) ເຊກອງ ໂດຍການຕ້ອນຮັບຂອງທ່ານ ດົງເຜັດ ພະຍົນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16, ປະທານສະພາປະຊາຊົນແຂວງເຊກອງ, ມີບັນດາທ່ານຄະນະ

ອ່ານຕໍ່ໜ້າ 3

## ຄະນະສະຫະພັນແມ່ຍິງ ສພຊ ອວຍພອນປະທານສູນກາງສະຫະພັນແມ່ຍິງລາວ



(ສພຊ) ເພື່ອເປັນການຊົມເຊີຍ ແລະ ສະເຫລີມສະຫລອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 67 ປີ (20/07/1955-20/07/2022) ໃຫ້ມີຄວາມໝາຍຄວາມສຳຄັນຍິ່ງຂຶ້ນ; ໃນວັນທີ 2 ສິງຫາ 2022 ທີ່ສູນກາງສະຫະພັນແມ່ຍິງລາວ, ຄະນະສະຫະພັນແມ່ຍິງ ສະພາແຫ່ງຊາດ ນຳໂດຍສະຫາຍ ນາງ ມະນີວັນ ເຍຍປາວເຮີ ປະທານສະຫະພັນແມ່ຍິງສະພາແຫ່ງຊາດ ພ້ອມດ້ວຍຄະນະ ໂດຍມີຕາງໜ້າຈາກບັນດາໜ່ວຍແມ່ຍິງພາຍໃນສະພາແຫ່ງຊາດ(ສພຊ)

ອ່ານຕໍ່ໜ້າ 3

## ປຶກສາຫາລືບາງມາດຕາ ຂອງກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ

(ສພຊ) ເພື່ອເປັນການປຶກສາຫາລື ແລະ ກວດກາຂໍ້ມູນການສັງລວມບາງມາດຕາຂອງກົດໝາຍທີ່ກຳນົດຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍຮ່ວມບັນດາກະຊວງ ແລະ ອົງການ ເພື່ອສັງລວມຂໍ້ມູນລາຍງານຕໍ່ກອງປະ ຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນສິງຫາ ປີ 2022; ໃນວັນທີ 2 ສິງຫາ 20222 ທີ່ສະພາແຫ່ງຊາດ, ກຳມາທິການກົດໝາຍສະພາແຫ່ງຊາດ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການສັງລວມຂໍ້ມູນບາງມາດຕາຂອງກົດໝາຍທີ່ກຳນົດໃຫ້ຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍ, ທີ່ຫ້ອງປະຊຸມອະເນກປະສົງສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ, ມີບັນດາທ່ານຜູ້ຕາງໜ້າຈາກກະຊວງ

ອ່ານຕໍ່ໜ້າ 2

## ສພຂ ທົ່ວພົນ ຮັບຮອງ ເອົາຫລາຍບັນຫາສຳຄັນຂອງແຂວງ


ໜ້າ 3

## ສ້າງຄວາມເຂັ້ມແຂງໃຫ້ແກ່ ສສຂ ແລະ ພະນັກງານ ສພຂ ໄຊຍະບູລີ

(ສພຊ) ໃນລະຫວ່າງວັນທີ 19-21 ກໍລະກົດຜ່ານມາ, ທີ່ສະໂມສອນຫ້ອງວ່າການເມືອງປາກລາຍ ແຂວງໄຊຍະບູລີ ໄດ້ສຳເລັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດ ທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ທັກສະຕ່າງໆ ໃນການປະຕິບັດສິດ-ພັນທະໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II ແລະ ພະນັກງານ-ລັດຖະກອນ ຂອງສະພາປະຊາຊົນແຂວງ (ສພຂ) ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ ແລະ ທ່ານ ຄຳຝົ້ນ ວົງສະຫວັນ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

**ຂໍ່ານັບຊົມເຊີຍວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ (15/8/1991-15/8/2022) ຢ່າງສຸດໃຈ!**

## ຍົກສູງ...



ມາຊິກສະພາແຫ່ງຊາດ (ສສຊ) ທີ່ມາຈາກ 8 ເຂດເລືອກຕັ້ງດັ່ງກ່າວ ຈຳນວນເກືອບ 50 ທ່ານ.

ຈຸດປະສົງຈັດກອງປະຊຸມຄັ້ງນີ້ ແມ່ນເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ ສສຊ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ, ມີຄວາມຮັບຮູ້, ຄວາມເຂົ້າໃຈ ກ່ຽວກັບບາງທັກສະທີ່ຈຳເປັນ ໃນການປະຕິບັດໜ້າທີ່ຕົວຈິງຂອງຕົນ; ພ້ອມທັງເປັນໂອກາດໃຫ້ແກ່ ສສຊ ໃນການແລກປ່ຽນ, ສົນທະນາ ກ່ຽວກັບບາງບົດຮຽນລະຫວ່າງວິທະຍາກອນ, ສສຊ ແລະ ພະນັກງານທີ່ເປັນເສນາທິການດ້ວຍກັນ ແນໃສ່ການຍົກລະດັບຄວາມຮັບຮູ້ ແລະ ຄວາມສາມາດໃນການປະຕິບັດໜ້າທີ່ການເມືອງໃຫ້ມີປະສິດທິຜົນດີ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງວິທະຍາກອນຈາກບັນດາກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດເຊັ່ນ: ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ຮອງປະທານກຳມາທິການແຜນການ, ການເງິນ ແລະ ກວດສອບ ທີ່ໄດ້ນຳສະເໜີຫົວຂໍ້: ທັກສະການປະກອບຄຳເຫັນ ແລະ ການຊັກຖາມ; ທັກສະການລົງພົບປະຜູ້ມີສິດເລືອກຕັ້ງ; ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ; ການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ແລະ ສພຂ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນສົນທະນາ, ແລກປ່ຽນປະກອບຄຳຄິດຄຳເຫັນ ໃນຫົວຂໍ້ຕ່າງໆທີ່ມີຄວາມສົນໃຈ ຢ່າງມີຈຸດສຸມກົງໄປກົງມາ ອັນໄດ້ສ້າງໃຫ້ ສສຊ ທີ່ເຂົ້າຮ່ວມສາມາດມີຂໍ້ມູນ ແລະ ບົດຮຽນຕົວຈິງ ໃນການປະຕິບັດໜ້າທີ່ຂອງຕົນ.

ໃນຕອນທ້າຍກອງປະຊຸມ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສັງລວມຄຳຄິດເຫັນຂອງບັນດາທ່ານຜູ້ແທນທີ່ຫລາກຫລາຍ, ອຸດົມສົມບູນ ໂດຍໄດ້ຕີລາຄາວ່າ: ບັນດາຫົວຂໍ້ທີ່ນຳສະເໜີໃນການເຝິກອົບຮົມຄັ້ງນີ້ ແມ່ນສອດຄ່ອງກັບສະພາບຄວາມຕ້ອງການຂອງວຽກງານຕົວຈິງຂອງສະພາແຫ່ງຊາດ ກໍຄືຂອງ ສສຊ ຢູ່ເຂດເລືອກຕັ້ງຕ່າງໆ ປະກອບສ່ວນຍົກລະດັບຂີດຄວາມສາມາດຂອງເຂົາເຈົ້າ ເພື່ອນຳໄປໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ ໃຫ້ມີຜົນສຳເລັດດີຂຶ້ນເລື້ອຍໆ; ກອງປະຊຸມຍັງໄດ້ຮຽກຮ້ອງໃຫ້ຜູ້ແທນທີ່ເຂົ້າຮ່ວມຊຸດເຝິກອົບຮົມ ຈົ່ງນຳເອົາບົດຮຽນທີ່ໄດ້ນຳຈາກການເຝິກອົບຮົມຄັ້ງນີ້ ເຂົ້າໃນການປະຕິບັດໜ້າທີ່ການເມືອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືຂອງ ສສຊ ໃຫ້ມີຜົນສຳເລັດດີຂຶ້ນເລື້ອຍໆ.

(ກົງທະນູຄຳ ພິພັດເສລີ)



## ຮຽງຮຽບ...

ພາຍໃຕ້ການເປັນປະທານກອງປະຊຸມຂອງທ່ານ ສຈ.ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ສະພາແຫ່ງຊາດ; ມີທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ, ທ່ານຮອງລັດຖະມົນຕີກະຊວງຍຸຕິທຳ, ບັນດາທ່ານຮອງປະທານກຳມາທິການຍຸຕິທຳ, ກຳມາທິການກົດໝາຍ, ຄະນະທີ່ປຶກສາດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນ ຈາກສຳນັກງານປະທານປະເທດ, ສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການຈັດຕັ້ງມະຫາຊົນ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ສະພາແຫ່ງຊາດ.

ກອງປະຊຸມຮຽບຮຽງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງຂໍຄວາມເປັນທຳ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ (ສສຊ) ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີຜູ້ລົງທະບຽນປະກອບຄຳເຫັນ ທັງໝົດ 38 ທ່ານ ແລະ ສົ່ງເອກະສານປະກອບຄຳເຫັນ 17 ທ່ານ ກວມເອົາທັງໝົດ 41 ມາດຕາ, 135 ເນື້ອໃນ ເຊິ່ງໃນກອງປະຊຸມ, ບັນດາທ່ານທີ່ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບ, ເພື່ອເຮັດໃຫ້ການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງຖືກຕ້ອງ ແລະ ສອດຄ່ອງຕາມມະຕິຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະບັບເລກທີ 037/ຄບສພ, ລົງວັນທີ 18 ມິຖຸນາ 2018 ແລະ ມະຕິ ສະບັບເລກທີ 112/ກມສພ, ລົງວັນທີ 2 ມິຖຸນາ 2020 ແນໃສ່ຫັນເອົາການຄຸ້ມຄອງລັດ, ການຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍໃຫ້ເຂົ້າສູ່ລວງເລິກ ແລະ ຊີວິດຕົວຈິງເທື່ອລະກ້າວ ທັງເປັນການເພີ່ມທະວີການຕິດຕາມກວດກາຂອງສະພາແຫ່ງຊາດຕໍ່ກັບຄວາມຮັບຜິດຊອບການເມືອງຂອງອົງການທີ່ມີສິດ ແລະ ໜ້າທີ່ ໃນການແກ້ໄຂຄຳຮ້ອງທຸກ ເພື່ອຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳຫລາຍຂຶ້ນ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ມີຄວາມຍຸຕິທຳ ແລະ ໂປ່ງໃສ.

(ນາງ ປາກາລັກ ພົມມີໄຊ)

## ປຶກສາ...



ອຸດສາຫະກຳ ແລະ ການຄ້າ, ຮອງປະທານກຳມາທິການກົດໝາຍ, ຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ, ວິຊາການ ພາຍໃນກຳມາທິການກົດໝາຍ ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານຫຍໍ້ການຜັນຂະຫຍາຍບາງມາດຕາຂອງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງອຸດສາຫະກຳ ແລະ ການຄ້າ ຈາກຜູ້ຕາງໜ້າກະຊວງອຸດສາຫະກຳ ແລະ ການຄ້າ ແລະ ປຶກສາຫາລືວິທີຈັດຕັ້ງປະຕິບັດ ແລະ ການສັງລວມຂໍ້ມູນບາງມາດຕາກົດໝາຍທີ່ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍຈາກຜູ້ເຂົ້າຮ່ວມກອງປະຊຸມ.

ໂອກາດດັ່ງກ່າວ, ທ່ານ ອຳໄພ ຈິດມານົບ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ກອງປະຊຸມໃນມື້ນີ້ຈະໄດ້ປຶກສາຫາລື ແລະ ກວດຄືນ ມີຫລື ຍັງຈັກມາດຕາຂອງແຕ່ລະກົດໝາຍ ທີ່ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ຂອງບັນດາກະຊວງ, ອົງການ; ສ້າງຄວາມເຂົ້າໃຈກ່ຽວກັບການຜັນຂະຫຍາຍບາງມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໃຫ້ຮັບຮູ້ນຳກັນວ່າແມ່ນກົນໄກໜຶ່ງ ທີ່ເຮັດໃຫ້ກົດໝາຍໄດ້ຖືກຈັດຕັ້ງປະຕິບັດເຂົ້າສູ່ຊີວິດຕົວຈິງຂອງສັງຄົມ; ປຶກສາຫາລືກ່ຽວກັບການສ້າງກຸ່ມປະສານງານກ່ຽວກັບວຽກງານດັ່ງກ່າວ (ທາງອອດແອັບ) ເພື່ອສະດວກໃນການສະໜອງຂໍ້ມູນເຊິ່ງກັນ ແລະ ກັນ ລະຫວ່າງເສນາທິການຂອງແຕ່ລະກຳມາທິການລວມທັງກະຊວງຕ່າງໆທີ່ພວກເຮົາເອີ້ນວ່າເຈົ້າຂອງກົດໝາຍ ໃຫ້ສະໜອງຂໍ້ມູນຈອດກັນ.

ຕາມຂໍ້ມູນເບື້ອງຕົ້ນ ຂອງໜ່ວຍງານປະສານງານສັງລວມຂໍ້ມູນບາງມາດຕາຂອງກົດໝາຍ ຂອງສະພາແຫ່ງຊາດ ເຊິ່ງປະກອບມີຕາງໜ້າຈາກກຳມາທິການຕ່າງໆ ເຫັນວ່າ ປັດຈຸບັນ ມາດຕາທີ່ກຳນົດໃຫ້ຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍຈຳນວນ 322 ມາດຕາ ໃນນີ້ ຂົງເຂດປົກຄອງ ແລະ ຍຸຕິທຳ 32 ມາດຕາ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 16 ມາດຕາ, ຂົງເຂດເສດຖະກິດ 204 ມາດຕາ, ຂົງເຂດວັດທະນະທຳ-ສັງຄົມ 73 ມາດຕາ ແລະ ຂົງເຂດຕ່າງປະເທດ 7 ມາດຕາ. ທີ່ກ່າວມານີ້ ເປັນຕົວເລກສະຖິຕິລວມທັງໝົດກົດໝາຍ ທີ່ປະກາດໃຊ້ໃນ 160 ກວ່າສະບັບ.

(ສອນສັກ ວັນວິໄຊ)

# ເລື່ອງເດັ່ນ ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

▫ *ກະຊວງສາທາລະນະສຸກ ໄດ້ຮຽກຮ້ອງໃຫ້ທຸກພາກສ່ວນ ໃຫ້ຄວາມຮ່ວມມືຊ່ວຍເປັນເຈົ້າການໃນການຊຸ້ນຳ-ນຳພາ ສະກັດກັ້ນ ແລະ ຕ້ານພະຍາດໄຂ້ຍຸງລາຍ ໂດຍການນຳໃຊ້ມາດຕະການທີ່ສຳຄັນ ຫັນເອົາການມີສ່ວນຮ່ວມ ແລະ ເປັນເຈົ້າການຂອງບຸກຄົນ, ຄອບຄົວ ໃນການປະຕິບັດຫລັກການ 5 ປ, ສ້າງຂະບວນການອະນາໄມ ພ້ອມທັງທຳລາຍແຫລ່ງແຜ່ພັນຍຸງລາຍທຸກໆອາທິດ ແລະ ສຳຄັນຖ້າມີຄົນເປັນໄຂ້ແມ່ນໃຫ້ໄປກວດ ແລະ ປິ່ນປົວຢູ່ໂຮງໝໍຂອງລັດ ຫ້າມບໍ່ໃຫ້ຊື້ຢາມາກິນເອງ, ໄປກວດຢູ່ຄລີນິກ ຫລື ໃສ່ນ້ຳທະເລຢູ່ເຮືອນເດັດຂາດ ເພາະອາດຈະມີອາການສົບ ແລະ ພາໃຫ້ເສຍຊີວິດໄດ້.*

***ນສພ. ປະຊາຊົນ 02/08/2022***

▫ *ນັບແຕ່ປີ 2018 ເປັນຕົ້ນມາ ບັນດາກະຊວງ, ອົງການທຽບເທົ່າກະຊວງ ຂັ້ນສູນກາງ ໄດ້ນຳໃຊ້ລະບົບຖານຂໍ້ມູນລັດຖະກອນ ເຂົ້າໃນວຽກງານລັດຖະກອນ ອົງການຈັດຕັ້ງຂອງຕົນຢ່າງມີປະສິດທິພາບ ສະດວກ ແລະ ວ່ອງໄວຂຶ້ນກວ່າເກົ່າ ສຳລັບການສ້າງລະບົບບັນຊີຈຳນວນພົນ ແລະ ບັນຊີເງິນເດືອນເປັນບັນຊີດຽວກັນ ແມ່ນໄດ້ເລີ່ມຕົ້ນຈັດຕັ້ງຢູ່ກະຊວງພາຍໃນ ຫ້ອງການສຳນັກງານນາຍົກລັດຖະມົນຕີ ແລະ ຄັງເງິນແຫ່ງຊາດ ນັບແຕ່ງວດ 1 ປີ 2018 ມາຮອດປັດຈຸບັນໄດ້ສຳເລັດການຈັດພິມ ແລະ ແຈກຢາຍບັດພະນັກງານ-ລັດຖະກອນຂອງກະຊວງ, ອົງການ ແລະ ບັນດາແຂວງຄື: ຂັ້ນສູນກາງ ຈຳນວນ 46 ພາກສ່ວນ ສຳເລັດ 42 ພາກສ່ວນ ມີຈຳນວນ 12.857 ຄົນ ຍັງຢູ່ຂັ້ນຕອນການພິມບັດ 4 ພາກສ່ວນ, ຂັ້ນແຂວງ ຈຳນວນ 18 ແຂວງ ສຳເລັດແລ້ວ 2 ແຂວງ ຈຳນວນ 2.746 ຄົນ (ນະຄອນຫລວງວຽງຈັນ ແລະ ແຂວງຫລວງນ້ຳທາ) ສ່ວນ 16 ແຂວງ ຍັງຢູ່ໃນຂັ້ນຕອນການຈັດພິມບັດ ແລະ ສຳລັບຂັ້ນເມືອງ ແມ່ນຢູ່ໃນຂັ້ນຕອນການກະກຽມຂະຫຍາຍການນຳໃຊ້ຂໍ້ມູນລັດຖະກອນ ໃນຂອບເຂດທົ່ວປະເທດ.*

***ນສພ. ວຽງຈັນໃໝ່ 03/08/2022***

▫ *ເນື່ອງໃນໂອກາດການສະເຫລີມສະຫລອງສັບປະດາສາກົນຂອງການລ້ຽງລູກດ້ວຍນົມແມ່ ສູນໂພສະນາການກະຊວງສາທາລະນະສຸກ ໄດ້ຍົກໃຫ້ເຫັນເຖິງຄຸນປະໂຫຍດຂອງນ້ຳນົມແມ່ມີສານອາຫານທີ່ຈຳເປັນທີ່ສຸດສຳລັບເດັກອ່ອນ ແລະ ເດັກນ້ອຍ ເພາະຈະຊ່ວຍໃຫ້ເດັກນ້ອຍມີພູມຕ້ານທານຕໍ່ກັບເຊື້ອພະຍາດ, ຫລຸດຜ່ອນອັດຕາການເຈັບເປັນ, ການຕາຍຂອງເດັກຫລັງເກີດ. ພ້ອມທັງສາມາດຊ່ວຍຫລຸດຜ່ອນອັດຕາການຂາດສານອາຫານຂອງເດັກນ້ອຍ ເຊິ່ງຜົນການສຳຫລວດດັດສະນີໝາຍຂອງສັງຄົມລາວເຫັນວ່າ: ໃນປີ 2012 ອັດຕາການລ້ຽງລູກດ້ວຍນ້ຳນົມແມ່ພຽງຢ່າງດຽວແຕ່ເດັກແລກເກີດຈົນຮອດອາຍຸ 6 ເດືອນ ມີ 40% ແລະ ເພີ່ມຂຶ້ນໃນປີ 2017 ເປັນ 45%.*

***ນສພ. ປະເທດລາວ 05/07/2022***




## ສ້າງຄວາມ...

ຮອງເຈົ້າເມືອງງປາກລາຍ ໂດຍການເປັນນັກວິທະຍາກອນຂອງທ່ານ ອຳໄພ ຈິດມານິນ ຮອງປະທານກຳມາທິການກົດໝາຍ ສະພາແຫ່ງຊາດ, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ, ທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ຕາງໜ້າຈາກພະແນກເຕັກໂນໂລຊີ ແລະ ການສື່ສານ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ແລະ ສສຂ ປະຈຳເຂດເລືອກຕັ້ງທັງ 11 ເມືອງ ໃນທົ່ວແຂວງ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງການ ພ້ອມດ້ວຍພະນັກງານ-ວິຊາການພາຍໃນສະພາປະຊາຊົນແຂວງ.

ທັງນີ້, ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ ສສຂ ແລະ ເສນາທິການຊ່ວຍວຽກຂອງ ສພຂ ພ້ອມທັງເປັນການຍົກລະດັບຄວາມຮູ້, ຄວາມສາມາດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນ 3 ພະລະບົດບາດຕົ້ນຕໍຂອງ ສພຂ ທີ່ໄດ້ກຳນົດໄວ້ ຄື: ດ້ານນິຕິບັນຍັດ ແມ່ນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ດ້ານການຕົກລົງບັນຫາພື້ນຖານສຳຄັນຂອງແຂວງເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ແລະ ດ້ານການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມພາຍໃນແຂວງ.

ກອງປະຊຸມເຝິກອົບຮົມຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີ ແລະ ບັນຍາຍເນື້ອໃນເອກະສານຈາກນັກວິທະຍາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການຕົວຈິງ ປະກອບມີ 7 ຫົວຂໍ້ ຄື: ການສ້າງນິຕິກຳໃຕ້ກົດໝາຍ ໃຫ້ ສສຂ ແລະ ພະນັກງານ-ລັດຖະກອນ ພາຍໃນ ສພຂ; ການໃຫ້ຄຳປຶກສາທາງດ້ານກົດໝາຍຕໍ່ຜູ້ມີສິດເລືອກຕັ້ງຂັ້ນເມືອງໃຫ້ແກ່ ສສຂ; ທັກສະການຕິດຕາມກວດກາ ແລະ ຊຸກຍູ້ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານທີ່ຕິດພັນກັບຂົງເຂດເສດຖະກິດ ເພື່ອພິຈາລະນາໃນກອງປະຊຸມສະໄໝສາມັນ ຂອງ ສພຂ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ແລະ ການຄົ້ນຄ້ວາ, ພິຈາລະນາ ບັນດາຄາດໝາຍດ້ານເສດຖະກິດມະຫາພາກ ການຈັດສັນງົບປະມານການລົງທຶນ; ການຕິດຕາມກວດກາ ແລະ ຊຸກຍູ້ມະຕິ ຂອງກອງປະຊຸມສະພາແຫ່ງຊາດ ແລະ ສພຂ ແລະ ບັນຫາທີ່ເຄັ່ງຮ້ອນຂອງແຂວງ; ການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຊີ້ແຈ້ງຂອງບຸກຄະລາກອນ ທີ່ ສພຂ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ; ກ່ຽວກັບການປະກອບຄຳເຫັນ ແລະ ຊັກຖາມໃຫ້ ສສຂ; ການນຳໃຊ້ເຕັກໂນໂລຊີເຂົ້າໃນການດຳເນີນກອງປະຊຸມທາງໄກ ແລະ ການລົງຄະແນນສຽງຮັບຮອງເອົາມະຕິຕ່າງໆ ໃຫ້ ສສຂ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ຄົ້ນຄ້ວາແລກປ່ຽນບົດຮຽນເຊິ່ງກັນແລະກັນ ພ້ອມທັງປະກອບຄຳຄິດຄຳເຫັນໃນແຕ່ລະຫົວຂໍ້ທີ່ນຳມາສະເໜີ ເຮັດໃຫ້ມີເນື້ອໃນເລິກເຊິ່ງ ແລະ ສາມາດນຳໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ.

ການດຳເນີນກອງປະຊຸມເຝິກອົບຮົມດັ່ງກ່າວ,ແມ່ນໄດ້ຮັບການສະໜັບສະໜູນໂດຍແຜນງານມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ CEGGA).

(ອິນທີ ຊຽວສີຟ້າ)

## ສພຂ...

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ຫົວພັນ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 29 ກໍລະກົດ 2022 ພາຍຫລັງທີ່ດຳເນີນມາເປັນເວລາ 3 ວັນເຕັມ (27-29 ກໍລະກົດ 2022) ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ໂດຍການເຂົ້າຮ່ວມມີທ່ານ ວັນໄຊ ແພງຊຸມມາ ເລຂາພັກແຂວງ, ເຈົ້າແຂວງງຫົວພັນ; ມີບັນດາທ່ານການນຳຂອງແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຜູ້ຕາງໜ້າຈາກອົງການຈັດຕັ້ງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ພະແນກການ, ອົງການທຽບເທົ່າ, ສອງກອງບັນຊາການ ແລະ ພາກສ່ວນທຸລະກິດຕ່າງໆເຂົ້າຮ່ວມ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນມີດັ່ງນີ້:

1. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022;

2. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດສອງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ;

3. ກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການຄຸ້ມຄອງສຳຫລວດ, ຂຸດຄົ້ນ ແລະ ຂຸດຄົ້ນສິ່ງແຮ່ທາດ ແລະ ບົດລາຍງານກ່ຽວກັບການຄຸ້ມຄອງການສົ່ງເສີມລົງ SME ຢູ່ແຂວງຫົວພັນ;

4. ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການປະເມີນລາຄາທີ່ດິນ ແລະ ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍນະໂຍບາຍສົ່ງເສີມການລົງທຶນສະເພາະກິດຈະການການປູກ-ລ້ຽງເປັນສິນຄ້າ ຢູ່ແຂວງຫົວພັນ;

5. ກອງປະຊຸມໄດ້ຮັບຟັງບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ຕິດພັນກັບການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດຂອງອົງການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍ ໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

6. ຮັບຟັງການລາຍງານກ່ຽວກັບການສ້າງຜູ້ພິພາກສາທີ່ດີແລະເກັ່ງໃນຂົງເຂດສານປະຊາຊົນແຂວງ ແລະ ເຂດ ເຊິ່ງອົງການທີ່ກ່ຽວຂ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດແຜນການສ້າງຜູ້ພິພາກສາ ຖືກຕ້ອງຕາມກົດໝາຍຄັດເລືອກເອົາຜູ້ພິພາກສາທີ່ດີ-ເກັ່ງ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຢູ່ໃນສານປະຊາຊົນແຂວງ ແລະ ເຂດ;

7. ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງ ສພຂ.

ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງຕໍ່ຄຳເຫັນ, ຄຳຊັກຖາມ ຂອງສະມາຊິກສະພາກແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ກໍຄືຄຳຄິດ, ຄຳເຫັນຂອງສັງຄົມ ກໍຄືປະຊາຊົນບັນດາເຜົ່າ ໃນທົ່ວແຂວງທີ່ມີຄວາມສົນໃຈ ຈາກທ່ານເຈົ້າແຂວງ, ບັນດາພະແນກການກ່ຽວຂ້ອງ ຂອງແຂວງ ແລະ ຫົວໜ້າອົງການໄອຍະການປະຊາຊົນແຂວງ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ ຊຸດທີ II ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນການຊີ້ນຳຢ່າງໃກ້ສິດ ຂອງຄະນະປະຈຳພັກແຂວງ ແລະ ຄວາມຮັບຜິດຊອບຂອງອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສະໜອງຂໍ້ມູນ, ເອກະສານ ບົດລາຍງານທີ່ມີເນື້ອໃນສຳຄັນ ໃຫ້ແກ່ ສພຂ ໄດ້ຄົ້ນຄວ້າ ແລະ ປະກອບຄວາມເຫັນຢ່າງເລິກເຊິ່ງ ແລະ ກ້າວໄປເຖິງການພິຈາລະນາຮັບຮອງເອົາ.

ກອງປະຊຸມ ໄດ້ສະແດງຄວາມຂອບໃຈຢ່າງສູງມາຍັງບັນດາທ່ານການນຳຂອງແຂວງ, ບັນດາທ່ານແຂກທີ່ມີກຽດ ທີ່ໄດ້ໃຫ້ການຕິດຕາມຢ່າງໃກ້ສິດ ແລະ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ສະແດງຄວາມຂອບໃຈພໍ່ແມ່ປະຊາຊົນບັນດາເຜົ່າທົ່ວແຂວງຫົວພັນ ທີ່ໄດ້ເອົາໃຈໃສ່ຕິດຕາມ ແລະ ສົ່ງຄວາມຄິດເຫັນທີ່ເປັນປະໂຫຍດ ໂດຍຜ່ານໂທລະສັບສາຍດ່ວນ ແລະ ຈາກສື່ຕ່າງໆມາຍັງກອງປະຊຸມ ເຊິ່ງຄວາມຄິດ, ຄວາມເຫັນດັ່ງກ່າວ, ຄະນະປະຈຳສະພາປະຊາຊົນແຂວງ ຈະສືບຕໍ່ປະສານສົມທົບກັບອົງການປົກຄອງແຂວງ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ພິຈາລະນາແກ້ໄຂຕາມຄວາມເໝາະສົມ, ຂໍສະແດງຄວາມຂອບໃຈກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ສື່ມວນຊົນ, ແພດໝໍ ແລະ ພາກສ່ວນກ່ຽວຂ້ອງ ໄດ້ພ້ອມກັນປະຕິບັດໜ້າທີ່ ຂອງຕົນດ້ວຍຄວາມຮັບຜິດຊອບສູງ ປະກອບສ່ວນເຮັດໃຫ້ກອງປະຊຸມຄັ້ງນີ້ມີຄວາມສະຫງົບປອດໄພ ແລະຜົນສຳເລັດຢ່າງຈົບງາມ.

ຜົນສຳເລັດຂອງກອງປະຊຸມຄັ້ງນີ້, ຖືເປັນໝາກຜົນແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່ໃນອົງການອຳນາດລັດຂັ້ນແຂວງ ກໍຄືການຍົກສູງຄວາມຮັບຜິດຊອບຄວາມເປັນເຈົ້າການຂອງບັນດາ ສສຂ ເຂົ້າໃນການຄົ້ນຄວ້າ ແລະພິຈາລະນາຮັບຮອງເອົາແຕ່ລະເນື້ອໃນສຳຄັນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ບົນພື້ນຖານຍຶດໝັ້ນຕໍ່ສິດ ແລະ ຜົນປະໂຫຍດລວມຂອງແຂວງ ແລະ ຂອງປະຊາຊົນບັນດາເຜົ່າໃນທົ່ວ ແຂວງຫົວພັນ.

(ນັກຂ່າວ ສພຂ ຫົວພັນ)

## ຮອງປະທານ...

ພັກ-ຄະນະນຳສະພາປະຊາຊົນແຂວງ, ຄະນະ ສສຊ-ສສຂ, ຄະນະກຳມະການ, ຂະແໜງການ ແລະ ພະນັກງານ-ລັດຖະກອນ ສພຂ ເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານ ສພຂ ໄດ້ລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ສພຂ ໃນໄລຍະຜ່ານມາ ເຊິ່ງທ່ານໄດ້ຍົກໃຫ້ເຫັນຜົນງານດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງທີ່ຈະໄດ້ພ້ອມກັນສືບຕໍ່ປັບປຸງແກ້ໄຂ ໂດຍໄລຍະຜ່ານມາແມ່ນໄດ້ເອົາໃຈໃສ່ໃນການປະຕິບັດ 3 ພາລະບົດບາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ຢ່າງແຂງແຮງ ພ້ອມທັງຍົກສູງຄວາມຮັບຜິດຊອບປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ແກ້ໄຂບັນຫາສຳຄັນຕ່າງໆໄດ້ຢ່າງທ່ວງທັນ.

ຈາກນັ້ນ, ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນໂອ້ລົມໂດຍທ່ານໄດ້ເນັ້ນຫລາຍບັນຫາທີ່ສຳຄັນ ຕໍ່ບັນດາສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ກໍຄື ສສຂ ແລະ ພະນັກງານຫລັກແຫລ່ງຂອງ ສພຂ ໃຫ້ສືບຕໍ່ເອົາໃຈໃສ່ຢ່າງຕັ້ງໜ້າເຂົ້າໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງແຂງແຮງ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ ໃນການຄົ້ນຄວ້າ ແລະ ພິຈາລະນາບັນຫາສຳຄັນຂອງທ້ອງຖິ່ນ, ນຳເອົາເນື້ອໃນຕ່າງໆ ທີ່ກອງປະຊຸມໄດ້ຮັບຮອງເອົາ ແລະ ນຳໄປເຜີຍແຜ່, ເຊື່ອມຊຶມ ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ເຂົ້າໃຈ ຢ່າງເລິກເຊິ່ງ ແລະ ກ້ວາງຂວາງ.

ໃນຕອນບ່າຍຂອງວັນດຽວກັນ, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງເດີນທາງໄປຢ້ຽມຊົມທຳມະຊາດແຫລ່ງທ່ອງທ່ຽວສີຂຽວ "ນ້ຳຕົກຕາດແຝກ" ຕັ້ງຢູ່ບໍລິເວນເຂດບ້ານດ່ານ, ເມືອງລະມາມ ແຂວງເຊກອງ ເຊິ່ງຫ່າງຈາກເທດສະບານແຂວງ ໄປທາງທິດໃຕ້ 18km ແລະ ຫ່າງຈາກເສັ້ນທາງເລກທີ 16B ໄປຫາຕາດ 2km, ສູງປະມານ 10-15m ແລະ ກວ້າງ 250m ເຊິ່ງແຫລ່ງທ່ອງທ່ຽວດັ່ງກ່າວມີຄວາມສວຍສົດງົດງາມ ແລະ ອຸດົມສົມບູນໄປດ້ວຍປ່າໄມ້ສີຂຽວ, ມີອາກາດປອດໂປ່ງແຈ່ມໃສ ແລະ ມີນ້ຳໄຫລຕະຫລອດລະດູການ ເຊິ່ງສາມາດໄປພັກຜ່ອນຢ່ອນໃຈ ແລະ ຜ່ອນຄາຍຄວາມອິດເມື່ອຍຈາກການເຮັດວຽກໄດ້ດີ.

(ນາລີວັນ)



## ຄະນະ...

ໄດ້ເຂົ້າອວຍພອນສະຫາຍ ນາງ ອິນລາວັນ ແກ້ວບຸນພັນ ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ.

ໂອກາດດັ່ງກ່າວ, ຄະນະໄດ້ຮັບຟັງປະຫວັດຄວາມເປັນມາກ່ຽວກັບວັນສ້າງຕັ້ງສະຫະພັນແມ່ຍິງລາວໂດຍຫຍໍ້, ພາລະບົດບາດ, ສິດ ແລະ ໜ້າທີ່, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ທິດທາງແຜນການຕໍ່ໜ້າ ໃນການປະຕິບັດໜ້າທີ່ຂອງສູນກາງສະຫະພັນແມ່ຍິງລາວຢູ່ຂັ້ນສູນກາງ ກໍຄືຢູ່ຂັ້ນທ້ອງຖິ່ນ; ຈາກນັ້ນ, ສະຫາຍ ນາງ ມະນີວັນ ເຢຍປາວເຮີ ກໍໄດ້ແຈ້ງໃຫ້ຮູ້ກ່ຽວກັບຜົນງານການເຄື່ອນໄຫວຂອງສະພັນແມ່ຍິງສະພາແຫ່ງຊາດ ທີ່ຍາມໃດຄະນະນຳ ສພຊ ກໍໄດ້ໃຫ້ຄວາມສຳຄັນ; ພ້ອມນັ້ນ, ສະຫາຍຍັງໄດ້ຕາງໜ້າຄະນະສະຫະພັນແມ່ຍິງສະພາແຫ່ງຊາດ ກ່າວຄຳອວຍພອນຕໍ່ຄະນະນຳຄະນະປະທານ ແລະ ບັນດາສະມາຊິກສະຫະພັນແມ່ຍິງລາວທຸກສະຫາຍ.

(ສອນສັກ ວັນວິໄຊ)

# ໜ່ວຍພັກຮາກຖານ ສພຂ ເຊກອງ ຮັບໃບຍັ້ງຢືນ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ II



(ສພຊ) ຕອນເຊົ້າວັນທີ 21 ກໍລະກົດ 2022 ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ, ໜ່ວຍພັກຮາກຖານ ສພຂ ເຊກອງ ໄດ້ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ II ປະຈໍາປີ 2021 ເຊິ່ງໃຫ້ເຂົ້າຮ່ວມ ແລະ ມອບໃບຢັ້ງຢືນ ໂດຍສະຫາຍ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ຜູ້ປະຈໍາການເລຂາພັກແຂວງ, ປະທານ ສພຂ ແລະ ກ່າວຮັບໂດຍສະຫາຍ ນາງ ຄໍາເສັງ ທຸມມະວົງສາ ກໍາມະການພັກແຂວງ, ເລຂາຄະນະພັກຮາກຖານ, ມີບັນດາສະຫາຍຄະນະພັກຮາກຖານ, ຄະນະໜ່ວຍພັກ, ສະມາຊິກພັກສົມບູນ-ສໍາຮອງ ພ້ອມດ້ວຍແຂກທີ່ຖືກເຊີນເຂົ້າຮ່ວມເປັນສັກຂີພິຍານ.

ໃນວາລະກອງປະຊຸມ, ສະຫາຍ ພົງສະຫວັດ ສິງຫາລາດ ຮອງເລຂາຄະນະພັກຮາກຖານ ສພຂ ໄດ້ຜ່ານບົດສະຫລຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ 2021 ໜ່ວຍພັກຮາກຖານ ສພຂ ມີສະມາຊິກພັກທັງໝົດ 44 ສະຫາຍ ຍິງ 16 ສະຫາຍ ໃນໄລຍະຜ່ານມາ ແມ່ນໄດ້ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານ ມີຜົນສໍາເລັດໃນແຕ່ລະດ້ານ ມີທັງດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້, ສາມາດປະຕິບັດໄດ້ຕາມມາດຖານເງື່ອນໄຂ ຂອງຄະນະພັກຂັ້ນເທິງວາງອອກ ກໍຄືທິດທາງແຜນການຂອງໜ່ວຍພັກຕົນກໍານົດໄວ້ ແລະ ໄດ້ປະເມີນນໍາພາດ້ານຄຸນທາດການເມືອງ, ດ້ານແນວຄິດ, ດ້ານການຈັດຕັ້ງ, ດ້ານແບບແຜນການນໍາພາ, ດ້ານປະຕິບັດໜ້າທີ່ການເມືອງໄດ້ເປັນຢ່າງດີ, ໄດ້ຖືເອົາການສຶກສາອົບຮົມການເມືອງ-ແນວຄິດ, ເຊື່ອມຊຶມບັນດາມະຕິ, ຄໍາສັ່ງ, ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ສະແດງອອກໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະຢູ່ບັນດາໜ່ວຍງານທີ່ຂຶ້ນກັບການນໍາພາຂອງແຕ່ລະໜ່ວຍພັກ ແນໃສ່ສ້າງໃຫ້ພະນັກງານສະມາຊິກພັກ ມີຄຸນທາດການເມືອງໜັກແໜ້ນ, ເອົາໃຈໃສ່ຕິດຕາມ, ກວດກາ ແລະ ແກ້ໄຂຜົນການດໍາເນີນຊີວິດການເມືອງດ້ວຍຄວາມຮັບຜິດຊອບສູງ, ປັບປຸງກໍ່ສ້າງໜ່ວຍພັກ ຂອງຕົນໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ເອົາໃຈໃສ່ປະຕິບັດໜ້າທີ່ການເມືອງທີ່ຂັ້ນເທິງມອບໝາຍໃຫ້ໃນແຕ່ລະໄລຍະໃຫ້ມີຜົນສໍາເລັດ.

ໂອກາດດັ່ງກ່າວ, ສະຫາຍ ດົງເຜັດ ພະຍົນ ກໍໄດ້ໂອ້ລົມ ແລະ ຊີ້ທິດເຍືອງທາງ ເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະໜ່ວຍພັກ ແລະ ສະມາຊິກພັກ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວຽກງານຈົນໄດ້ຮັບຜົນສໍາເລັດຫຼາຍດ້ານ, ພ້ອມທັງເນັ້ນໃຫ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ເຊື່ອມຊຶມບັນດາມະຕິ, ຄໍາສັ່ງ ແລະ ເອກະສານສໍາຄັນຕ່າງໆຂອງພັກ-ຂອງຊາດ ໃຫ້ແກ່ສະມາຊິກພັກ-ພະນັກງານລັດຖະກອນໃນຄວາມຮັບຜິດຊອບຂອງຕົນ, ເອົາໃຈໃສ່ກໍ່ສ້າງ, ປັບປຸງ, ແບບແຜນການນໍາພາ, ແບບແຜນວິທີເຮັດວຽກໃຫ້ເປັນປົກກະຕິ ແລະ ມີຄຸນນະພາບ ແລະ ສືບຕໍ່ຍົກສູງບົດບາດການນໍາພາຂອງພັກ ແລະ ຄວາມເປັນແບບຢ່າງນໍາໜ້າຂອງສະມາຊິກພັກໃຫ້ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີຜົນສໍາເລັດ.

ພ້ອມດຽວກັນນີ້, ຍັງໄດ້ຮັບຟັງການຜ່ານບົດສະຫລຸບການຈັດຕັ້ງປະຕິບັດວຽກງານ ປະຈໍາ 6 ເດືອນຕົ້ນປີ ແລະ ທິດທາງແຜນການເຄື່ອນໄຫວ 6 ເດືອນທ້າຍປີ 2022 ຂອງຄະນະພັກຮາກຖານ ສພຂ ຕື່ມອີກ.

(ນາງ ນາລີວັນ)

# ຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈໍາ 6 ເດືອນຕົ້ນປີ ສພຂ ຜົ້ງສາລີ



(ສພຊ) ໃນວັນທີ 27 ກໍລະກົດ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ມີກອງປະຊຸມສະລຸບຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈໍາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ສພຂ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານຄະນະປະຈໍາ ສພຂ; ມີບັນດາທ່ານຄະນະປະຈໍາ ສພຂ, ຮອງປະທານຄະນະກໍາມະການ, ຮອງຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນພາຍ ສພຂ ເຂົ້າຮ່ວມ.

ທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການ ສພຂ ຂຶ້ນຜ່ານບົດສະຫລຸບຕີລາຄາວຽກງານຮອບດ້ານ ປະຈໍາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ສພຂ; ຈາກນັ້ນ, ປະທານກອງປະຊຸມໄດ້ເຈາະຈີ້ມບາງບັນຫາ ເພື່ອເປັນບ່ອນອີງໃນການປັບປຸງບົດສະຫລຸບດັ່ງກ່າວ ເປັນຕົ້ນແມ່ນດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນທີ່ ສພຂ ໄດ້ເຄື່ອນໄຫວວຽກງານໃນໄລຍະ 6 ເດືອນຜ່ານມາ. ພ້ອມກັນນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ຜັດປ່ຽນກັນປະກອບຄໍາເຫັນ, ແລກປ່ຽນບົດຮຽນ ພ້ອມທັງຫາວິທີການແກ້ໃນຕໍ່ໜ້າ ເພື່ອຄວາມເປັນເອກະພາບ ຢ່າງກົງໄປກົງມາ ແລະ ສ້າງສັນ ແນໃສ່ຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງ ສພຂ, ທັງຮັບປະກັນໃຫ້ການປະຕິບັດພາລະບົດບາດຂອງ ສພຂ ໃນຖານະເປັນອົງການນິຕິບັນຍັດມີຄວາມເຂັ້ມແຂງ ໃນການສືບຕໍ່ສ້າງ ແລະ ປັບປຸງອໍານາດລັດທຸກຂັ້ນ ໃຫ້ມີຄຸນນະພາບ ແລະ ມີປະສິດທິພາບ, ປະສິດຜົນສູງ.

ຕອນທ້າຍກອງປະຊຸມ, ທ່ານ ທອງສີ ເສົາສຸລິພົມ ໄດ້ສັງລວມຄືນຜົນຂອງການດໍາເນີນກອງປະຊຸມໃນຄັ້ງນີ້ ເຊິ່ງທ່ານໄດ້ຕີລາຄາສູງຕໍ່ກັບຄວາມພະຍາຍາມຂອງຄະນະນໍາ, ພະນັກງານ-ລັດຖະກອນ ໃນການປັບປຸງລະບົບການເມືອງ ປະຊາທິປະໄຕ ໃນຂະແໜງການຂອງ ສພຂ ທີ່ປະຕິບັດໜ້າທີ່ໃນການເຄື່ອນໄຫວຂອງ ສພຂ ທີ່ສະແດງອອກໃນບົດສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງ ສພຂ ໃນ 6 ເດືອນຕົ້ນປີທີ່ຜ່ານມາ. ພ້ອມກັນນັ້ນ, ທ່ານຍັງໄດ້ມີບາງຄໍາເຫັນເນັ້ນໜັກຕື່ມກ່ຽວກັບດ້ານການເມືອງ-ແນວຄິດ, ດ້ານຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ແບບແຜນວິທີເຮັດວຽກ ແລະ ການປະສານງານຂອງ ສພຂ ຕື່ມອີກ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ທວນຄືນມູນເຊື້ອວັນສ້າງຕັ້ງແມ່ຍິງລາວ ຄົບຮອບ 67 ປີ

(ສພຊ) ເພື່ອເປັນການທວນຄືນມູນເຊື້ອນີ້ແມ່ນເພື່ອໃຫ້ເອື້ອຍນ້ອງແມ່ຍິງ ໄດ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບເນື້ອໃນປະຫວັດມູນເຊື້ອການກໍາເນີດ,ເຕີບໃຫຍ່ຂະຫຍາຍຕົວ ແລະ ຜົນງານການເຄື່ອນໄຫວຂອງອົງການຈັດຕັ້ງສະຫະພັນແມ່ຍິງ ແລະ ແມ່ຍິງລາວບັນດາເຜົ່າ ທີ່ໄດ້ອຸທິດຕົນເພື່ອພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືການພັດທະນາແມ່ຍິງ.



ໜ່ວຍຮາກຖານສະຫະພັນແມ່ຍິງສະພາປະຊາຊົນແຂວງ (ສພຂ) 2 ແຂວງຄື: ອຸດົມໄຊ ແລະ ເຊກອງ ໄດ້ຈັດພິທີປາຖະກະຖາວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 67 ປີ (20/7/1955-20/7/2021) ເມື່ອເດືອນກໍລະກົດຜ່ານມາ ເຊິ່ງ ສພຂ ອຸດົມໄຊ ໄດ້ຈັດຂຶ້ນທີ່ຫ້ອງປະຊຸມອົງການໄອຍະການປະຊາຊົນແຂວງອຸດົມໄຊ ໂດຍການປາຖະກະຖາແມ່ນສະຫາຍ ນາງ ຄໍາພອນ ພົມມະຈັນ ຮອງປະທານ ສພຂ ແລະ ສະຫາຍ ນາງ ສົມຫວັງ ໄຊຍະຕິ ຮອງປະທານກວດກາລັດແຂວງ; ມີຄະນະໜ່ວຍແມ່ຍິງ ພ້ອມດ້ວຍສະມາຊິກແມ່ຍິງມາຈາກ ສພຂ, ອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ເຂົ້າຮ່ວມ.

ສະຫາຍ ນາງ ຄໍາພອນ ພົມມະຈັນ ໄດ້ຍົກໃຫ້ຮູ້ເຖິງການກໍາເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງສະຫະພັນແມ່ຍິງລາວ ທີ່ໄດ້ກໍາເນີດຂຶ້ນໃນໄລຍະຂອງການປະຕິວັດຊາດຄຽງຄູ່ກັບອົງການຈັດ ຕັ້ງອື່ນໆ ແລະ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ໃນວັນທີ 20 ກໍລະກົດ 1955. ພາຍຫລັງທີ່ໄດ້ຮັບການສ້າງຕັ້ງຂຶ້ນອົງການຈັດຕັ້ງແມ່ຍິງ ກໍໄດ້ປະຕິບັດພາລະບົດບາດ, ໜ້າທີ່ຂອງຕົນອຸທິດເຫື່ອແຮງ, ສະຕິປັນຍາ ແລະ ສະຫລະຊີວິດເລືອດເນື້ອປະກອບສ່ວນອັນສໍາຄັນເຂົ້າໃນພາລະກິດການປະຕິວັດ ກາຍເປັນກໍາລັງແຮງທີ່ມີຄວາມສໍາຄັນຂອງການປະຕິວັດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນຍາດໄດ້ຜົນງານທີ່ພົ້ນເດັ່ນໃນການຕໍ່ສູ້ປົດປ່ອຍຊາດ, ມາໃນປັດຈຸບັນອົງການຈັດຕັ້ງແມ່ຍິງໄດ້ສືບຕໍ່ປະຕິບັດພາລະບົດບາດ, ສິດໜ້າທີ່ຂອງຕົນຢ່າງຕັ້ງໜ້າ ເຮັດໃຫ້ອົງການຈັດຕັ້ງແມ່ຍິງມີການເຕີບໃຫຍ່ຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະ, ປະກອບສ່ວນອັນສໍາຄັນເຂົ້າໃນຍຸດທະສາດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ໃນໂອກາດນີ້, ສະຫາຍ ນາງ ສົມຈັນ ຈິດວົງເດືອນ ຍັງໄດ້ມີຄໍາເຫັນຮຽກຮ້ອງໃຫ້ເອື້ອຍນ້ອງແມ່ຍິງ ໃຫ້ສືບຕໍ່ເພີ່ມທະວີຄວາມກ້າຫານ, ໃຫ້ການຕໍານິກໍ່ສ້າງ, ຊ່ວຍເຫລືອເຊິ່ງກັນແລະກັນ, ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ມີການເຄື່ອນໄຫວທີ່ຖືກຕ້ອງຕາມຮີດຄອງປະເພນີ ແລະ ລະບຽບກົດໝາຍຂອງບ້ານເມືອງ, ເປັນແບບຢ່າງທາງດ້ານການປະຕິບັດກົດໝາຍ, ເພີ່ມທະວີຄວາມສາມັກຄີແມ່ຍິງບັນດາເຜົ່າ, ສືບຕໍ່ຍົກລະດັບຄວາມສາມາດຂອງຕົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກໃນໄລຍະໃໝ່ ແລະ ປະຕິບັດໜ້າທີ່ວຽກງານດ້ວຍຄວາມຮັບຜິດຊອບ.

ສໍາລັບ ສພຂ ເຊກອງ ໄດ້ຈັດຂຶ້ນທີ່ສະໂມສອນ ສພຂ ເຊກອງ ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ປອ. ແພງສີ ສີລາວີ ຄະນະປະຈໍາພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ສະຫາຍ ນາງ ບຸນຮູ້ ດວງບຸບຜາ ປະທານໜ່ວຍຮາກຖານສະຫະພັນແມ່ຍິງ ສພຂ; ມີຄະນະໜ່ວຍແມ່ຍິງ ພ້ອມດ້ວຍສະມາຊິກ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ສະຫາຍ ນາງ ບຸນຮູ້ ດວງບຸບຜາ ໄດ້ເລົ່າຄືນປະຫວັດການກໍາເນີດ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງແມ່ຍິງລາວນັບແຕ່ອະດີດຈົນເຖິງປັດຈຸບັນ ໂດຍຍົກໃຫ້ເຫັນບາງຕອນສໍາຄັນວ່າ: ພາຍຫລັງທີ່ພັກປະຊາຊົນປະຕິວັດລາວ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 22 ມີນາ 1955 ພັກກໍໄດ້ເອົາໃຈໃສ່ປຸກລະດົມຂົນຂວາຍກໍ່ສ້າງແມ່ຍິງ ໃຫ້ມີຄວາມຕື່ນຕົວປະກອບສ່ວນໃນພາລະກິດປະຕິວັດ ແລະ ຖືແມ່ຍິງເປັນພາກສ່ວນໜຶ່ງໃນກໍາລັງແຮງສໍາຄັນຂອງພັກ, ຕົກມາຮອດວັນທີ 20 ກໍລະກົດ 1955 ພັກໄດ້ຈັດຕັ້ງຄົ້ນຄວ້າວຽກງານແມ່ຍິງ ຖືເປັນຕົ້ນກໍາເນີດຂອງອົງການຈັດຕັ້ງສະຫະພັນແມ່ຍິງລາວ. ນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ ອົງການຈັດຕັ້ງແມ່ຍິງ ໄດ້ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ເອົາໃຈໃສ່ປະຕິບັດໂຄງການດໍາເນີນງານໃນການພັດທະນາ ແລະ ຍົກສູງບົດບາດຂອງເອື້ອຍນ້ອງແມ່ຍິງໃຫ້ສູງຂຶ້ນ; ໄດ້ເຄື່ອນໄຫວຕາມພາລະບົດບາດ, ໜ້າທີ່ ໄດ້ກໍານົດໄວ້ໃນກົດລະບຽບຂອງຕົນ ຢ່າງແຂງແຮງເປັນຕົ້ນ ໄດ້ເອົາໃຈໃສ່ປະຕິບັດໂຄງການດໍາເນີນງານ ໃນການພັດທະນາ ແລະຍົກສູງບົດບາດ, ໂຄງການດໍາເນີນງານຂອງຕົນ ແລະ ໄດ້ປັບປຸງ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະ ພ້ອມທັງເຮັດໜ້າທີ່ເບິ່ງແຍງ, ລ້ຽງດູ, ຕິດຕໍ່, ສິ່ງຂ່າວ-ເອກະສານ ໃຫ້ທະຫານທີ່ປະຕິບັດໜ້າທີ່ຢູ່ແນວໜ້າ ແລະ ໃນເຂດຄວບຄຸມຂອງສັດຕູ, ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ແລະ ປຸກລະດົມ ຂົນຂວາຍແມ່ຍິງ ລາວບັນດາເຜົ່າ ເຂົ້າເປັນກໍາລັງແຮງໃຫ້ແກ່ການປະຕິວັດປົດປ່ອຍຊາດຢ່າງມີຄວາມກ້າຫານ.

ໂອກາດດັ່ງກ່າວ, ຍັງໄດ້ຮັບຟັງກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງໜ່ວຍຮາກຖານສະຫະພັນແມ່ຍິງ ສພຂ ເຊກອງ ປະຈໍາ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການຈັດຕັ້ງປະຕິບັດວຽກງານ ປະຈໍາ 6 ເດືອນທ້າຍປີ 2022 ຈາກສະຫາຍ ນາງ ແກ້ວໄພລິນ ດາລາລັດສະໝີ ຮອງປະທານໜ່ວຍຮາກຖານສະຫະພັນແມ່ຍິງ ສພຂ ເຊກອງ ອີກດ້ວຍ.

ໂອກາດດັ່ງກ່າວ, ສະຫາຍ ປອ. ແພງສີ ສີລາວີ ໄດ້ໂອ້ລົມຕໍ່ທີ່ປະຊຸມ ເຊິ່ງສະຫາຍໄດ້ເນັ້ນໃຫ້ຄະນະພັກ, ອົງການຈັດຕັ້ງມະຫາຊົນ ຕ້ອງໄດ້ເອົາໃຈໃສ່ໃນການສ້າງ ແລະ ເອື້ອອໍານວຍຄວາມສະດວກໃຫ້ແກ່ແມ່ຍິງ, ກ້າມອບວຽກໃຫ້ແມ່ຍິງ, ສະໜັບສະໜູນໃຫ້ແມ່ຍິງໄດ້ຮັບການພັດທະນາໃນທຸກດ້ານ, ຄະນະສະຫະພັນແມ່ຍິງ ແລະ ເອື້ອຍນ້ອງແມ່ຍິງທຸກຄົນ ຕ້ອງໄດ້ບຸກບືນພັດທະນາຕົນເອງໃນທຸກດ້ານ ໃຫ້ແຂງແຮງຂຶ້ນກວ່າເກົ່າ, ຫັນປ່ຽນແນວຄິດຄອງເດີມ, ຫັນປ່ຽນແບບແຜນວິທີເຮັດວຽກ, ເພີ່ມຄວາມຮັບຜິດຊອບ ແລະປະສິດທິຜົນໃນການແກ້ໄຂບັນຫາ, ປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນຖັນແຖວແມ່ຍິງ, ຄອບຄົວ, ສັງຄົມ ແນໃສ່ເຮັດໃຫ້ຂະບວນການແມ່ຍິງເຕີບໃຫຍ່ຂະຫຍາຍຕົວທາງດ້ານ ປະລິມານ ແລະ ຄຸນນະພາບ.

(ແສງພອນ ອິນນະລົງ ແລະ ນາງ ນາລີວັນ)

# ສພຂ ອຸດົມໄຊ ຈະພິຈາລະນາ 13 ບັນຫາສຳຄັນ ໃນກອງປະຊຸມສະໄໝສາມັນ



(ສພຊ) ຕອນບ່າຍຂອງວັນທີ 2 ສິງຫາ 2022 ຢູ່ທີ່ຫ້ອງສະຕູດີໂອສະຖານີວິທະຍຸ-ໂທລະພາບແຂວງ, ທ່ານ ນາງ ວັນສີ ພອງມະໄລ ເລຂາທິການສະພາປະຊາຊົນແຂວງ (ສພຂ), ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ໄດ້ຖະແຫລງຕໍ່ສື່ມວນຊົນຂອງແຂວງກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ຊຸດທີ II ວ່າ: ໂດຍປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ກ່ຽວກັບການດຳເນີນກອງປະຊຸມສະພາປະຊາຊົນຂັ້ນແຂວງ. ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ຈະໄດ້ໄຂຂຶ້ນໃນລະຫວ່າງວັນທີ 9-10 ສິງຫາ 2022 ໃຊ້ເວລາ 2 ວັນ ຢູ່ທີ່ສະໂມສອນແຂວງ (ບ້ານເຈງ); ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຈະໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເນື້ອໃນສຳຄັນ ຄື:

**ວຽກງານອົງການປົກຄອງແຂວງ:** ບົດລາຍງານ ໂດຍສັງເຂບຂອງທ່ານເຈົ້າແຂວງ ກ່ຽວກັບວຽກງານການບໍລິຫານລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2022; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2022; ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ, ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2022 ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດລາຍງານກ່ຽວກັບການແກ້ໄຂບັນຫາເສດຖະກິດ, ການຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ແລະ ສະພາບຄວາມຫຍຸ້ງຍາກທາງດ້ານນ້ຳມັນເຊື້ອໄຟພາຍໃນແຂວງອຸດົມໄຊ; ບົດລາຍງານກ່ຽວກັບຮ້ານແລກປ່ຽນ, ການຄຸ້ມຄອງເງິນຕາ ແລະ ການແກ້ໄຂບັນຫາເງິນເຟີ້ ຢູ່ແຂວງອຸດົມໄຊ; ບົດລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຊົດເຊີຍຜົນກະທົບຈາກໂຄງການພັດທະນາແຄມນ້ຳກໍ ເຂດເທສະບານເມືອງໄຊ, ແຂວງອຸດົມໄຊ ແລະ ການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ນອກແລວແດງ ຊ່ວງຜ່ານແຂວງອຸດົມໄຊ; ບົດລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງສະໜາມກິລາ, ສະ ບັບເລກທີ 69/ຈຂ.ອຊ, ລົງວັນທີ 29 ມັງກອນ 2021 ແລະ ການຈັດຕັ້ງປະຕິບັດວຽກງານ ກິລາ-ກາຍະກຳ 6 ເດືອນຕົ້ນ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2022.

**ວຽກງານຍຸຕິທຳ, ປກຊ-ປກສ:** ບົດລາຍງານການຈັດຕັ້ງປະຕິບັດວ່າລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂປາກົດການຫຍໍ້ທໍ້ພາຍໃນແຂວງອຸດົມໄຊ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2022.

**ວຽກງານຂອງສະພາປະຊາຊົນແຂວງ:** ບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2022.

**ດ້ານນິຕິກຳ:** ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຈຳນວນ 2 ສະບັບ, ໃນນີ້ ສ້າງໃໝ່ມີ 1 ສະບັບ ແລະ ປັບປຸງ 1 ສະບັບຄື: ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍ ການຄຸ້ມຄອງຈັດງານປະເພນີຕ່າງໆຢູ່ແຂວງອຸດົມໄຊ (ສະບັບສ້າງໃໝ່); ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການປະເມີນລາຄາທີ່ດິນໃນທົ່ວແຂວງອຸດົມໄຊ ເລກທີ 506/ຈຂ.ອຊ, ລົງວັນທີ 19 ພຶດສະພາ 2020 (ສະບັບປັບປຸງ).

**ບົດປະກອບຄຳເຫັນຂອງຄະນະປະຈຳ ສພຂ:** ບົດປະກອບຄຳເຫັນ ຂອງຄະນະປະຈຳສະພາປະຊາຊົນແຂວງ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2022; ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດປະກອບຄຳເຫັນຂອງຄະນະປະຈຳສະພາປະຊາຊົນແຂວງ ຕໍ່ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂປາກົດການຫຍໍ້ທໍ້ພາຍໃນແຂວງອຸດົມໄຊ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2022.

ຕະຫລອດໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II, ຄະນະເລຂາທິການ ສພຂ ໄດ້ຈັດຕັ້ງໂທລະສັບສາຍດ່ວນ 081 156 ໂດຍບໍ່ເສຍຄາ ຫລື ຈະສົ່ງເປັນລາຍລັກອັກສອນມາທີ່ ສພຂ ອຸດົມໄຊ ຕັ້ງຢູ່ບ້ານນາເລົາ ເມືອງໄຊ ແຂວງອຸດົມໄຊ ໃນໂມງລັດຖະການ ເພື່ອຮັບເອົາຄຳຄິດເຫັນ ແລະ ຄຳສະເໜີຂອງປະຊາຊົນບັນດາເຜົ່າ ມາຍັງກອງປະຊຸມ.

ໃນໂອກາດດັ່ງກ່າວ, ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າໃນທົ່ວແຂວງອຸດົມໄຊ ຈົ່ງພ້ອມກັນຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II ຄັ້ງນີ້ດ້ວຍ.

(ແສງພອນ ອິນນະລົງ)

# ເຊື່ອມຊຶມເອກະສານ ເສີມຂະຫຍາຍມູນເຊື້ອລາວ-ຫວຽດນາມ



(ສພຊ) ໃນຕອນເຊົ້າຂອງວັນທີ 26 ກໍລະກົດ 2022 ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ ໄດ້ຈັດພິທີປາຖະກະຖາເຊື່ອມຊຶມເອກະສານເສີມຂະຫຍາຍມູນເຊື້ອສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ ໃຫ້ໝັ້ນຄົງຂະໜົງແກ່ນຕະຫລອດໄປ ເນື່ອງໃນໂອກາດສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ວັນເຊັນສົນທິສັນຍາມິດຕະພາບການຮ່ວມມື ຄົບຮອບ 45 ປີ (18/7/1977-18/7/2022) ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ໂດຍການເປັນປະທານ ແລະ ບັນຍາຍເອກະສານຂອງທ່ານ ແກ້ວລັດຕະນະ ສີຫາວົງ ຄະນະປະຈຳພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ, ມີທ່ານ ທະນົງສັກ ດວງມາລາ ຄະນະພັກຮາກຖານ, ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ, ມີບັນດາທ່ານໃນຄະນະພັກ-ຄະນະນຳຂອງພະແນກ, ຫົວໜ້າ-ຮອງຫົວໜ້າຂະແໜງການ ຕະຫລອດຮອດພະນັກງານວິຊາການຂອງພະແນກເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ທະນົງສັກ ດວງມາລາ ໄດ້ລາຍງານຫຍໍ້ກ່ຽວກັບຈັດຕັ້ງການສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ວັນເຊັນສົນທິສັນຍາມິດຕະພາບ ການຮ່ວມມື ຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ ທີ່ໄດ້ເຄື່ອນໄຫວຮ່ວມກັບອົງການປົກຄອງແຂວງ ແລະ ບັນດາພະແນກການກົມກອງອ້ອມຂ້າງແຂວງ ແລະນຳພາພະນັກງານລັດຖະກອນຂອງຕົນ ໃນການສ້າງຂະບວນການຕ່າງໆ ເພື່ອສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ຢ່າງເປັນຂະບວນການຟົດຟື້ນ. ຈາກນັ້ນ, ທ່ານ ແກ້ວລັດຕະນະ ສີຫາວົງ ປະທານກອງປະຊຸມ ໄດ້ຂຶ້ນບັນລະຍາເອກະສານເສີມຂະຫຍາຍມູນເຊື້ອສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ ໃຫ້ໝັ້ນຄົງຂະໜົງແກ່ນຕະຫລອດໄປ ໃຫ້ພະນັກງານສະມາຊິກພັກ, ພະນັກງານການນຳຂັ້ນສູງ ແລະ ພະນັກງານຫລັກແຫລ່ງຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ ໄດ້ເຊື່ອມຊຶມ, ກຳແໜ້ນ ແລະ ເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມໝາຍຄວາມສຳຄັນຂອງສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ.

(ສົມວິຈິດ ໄຊມີນຕີ)

# ມອບໃບຍ້ອງຍໍໃຫ້ແກ່ກົມກອງ ແລະ ບຸກຄົນ ທີ່ມີຜົນງານດີເດັ່ນຂອງ ສພຂ ບໍ່ແກ້ວ



(ສພຊ) ຕອນເຊົ້າວັນທີ 22 ກໍລະກົດ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ໄດ້ຈັດພິທີມອບໃບຍ້ອງຍໍໃຫ້ແກ່ກົມກອງ ແລະ ບຸກຄົນທີ່ມີຜົນງານດີເດັ່ນ ປະຈຳປີ 2021 ພາຍໃຕ້ການເຂົ້າຮ່ວມຂອງທ່ານ ຈອມສີ ລັດຕະນະປັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີຄະນະປະຈຳ, ຄະນະເລຂາທິການ ພ້ອມດ້ວຍພະນັກງານ-ລັດຖະກອນ ສພຂ ເຂົ້າຮ່ວມ 46 ສະຫາຍ ຍິງ 17 ສະຫາຍ.

ພິທີດັ່ງກ່າວ, ຄະນະຈັດຕັ້ງພິທີໄດ້ຂຶ້ນຜ່ານມະຕິຕົກລົງຂອງເຈົ້າແຂວງໆບໍ່ແກ້ວ ສະບັບ 174/ຈຂ.ບກ, ລົງວັນທີ 23 ກຸມພາ 2022 ວ່າດ້ວຍການຍ້ອງຍໍກົມກອງລວມໝູ່ ແລະ ບຸກຄົນ, ບ້ານ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືແຂວງບໍ່ແກ້ວ ປະຈຳປີ 2021. ຈາກນັ້ນ, ໄດ້ມີພິທີມອບໃບຍ້ອງຍໍກົມກອງ ແລະ ບຸກຄົນ ຢ່າງເປັນທາງການ ໂດຍການມອບຂອງທ່ານ ຈອມສີ ລັດຕະນະປັນ ແຕ່ຮັບໂດຍບັນດາທ່ານທີ່ມີລາຍຊື່ໄດ້ຮັບໃບຍ້ອງຍໍດັ່ງກ່າວ.

ຕອນທ້າຍພິທີ, ທ່ານ ຈອມສີ ລັດຕະນະປັນ ຍັງໂອ້ລົມ ແລະ ທິດຊີ້ນຳແກ່ພະນັກງານ ສພຂ ໃຫ້ພ້ອມໃຈກັນເອົາໃຈໃສ່ປະຕິບັດໜ້າທີ່ວຽກງານ ແລະ ປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ກໍຄືແຂວງບໍ່ແກ້ວ ໃຫ້ມີບາດກ້າວຂະຫຍາຍຕົວ ແລະ ໄດ້ຮັບການພັດທະນາຂຶ້ນໄປເລື້ອຍໆໃນຕໍ່ໜ້າ.

(ນາງ ຂັນຖະໜອມ ແກ້ວມະນີ)

# ສພຂ ສະຫວັນນະເຂດ ມອບລົດ ນຳສົ່ງຄົນເຈັບໃຫ້ໂຮງໝໍເມືອງນອງ



(ສພຊ) ໃນຕອນບ່າຍວັນທີ 19 ກໍລະກົດ 2022 ຢູ່ທີ່ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ມອບ-ຮັບລົດຊ່ວຍເຫລືອ, ເປັນລົດນຳສົ່ງຄົນເຈັບ (Ambulance) ຈຳນວນ 1 ຄັນ ໃຫ້ແກ່ໂຮງໝໍເມືອງນອງ ແຂວງສະຫວັນນະເຂດ ເຊິ່ງລົດດັ່ງກ່າວ ໄດ້ຮັບຕໍ່ຈາກຄະນະເລຂາທິການສະພາແຫ່ງຊາດ ໂດຍໄດ້ຮັບການຊ່ວຍເຫລືອລ້າຈາກມູນລະນິທິສະຫວັດດີການ ແລະ ສັງຄົມ GO & DO ແຫ່ງ ສ.ເກົາຫລີ ໂດຍຕາງໜ້າມອບແມ່ນທ່ານ ພູທອນ ພຸດທະຂັນຕິ ເລຂາທິການ ສພຂ ແລະ ຮັບໂດຍທ່ານ ລຳແກ້ວ ແສງໝູທອງ ກຳມະການພັກແຂວງ, ເຈົ້າເມືອງໆນອງ. ເຂົ້າຮ່ວມເປັນສັກຂີພິຍານມີບັນດາທ່ານຄະນະປະຈຳ ສພຂ, ຄະນະເລຂາທິການ, ຕາງໜ້າຈາກພະແນກສາທາລະນະສຸກແຂວງ, ຫົວໜ້າຫ້ອງການສາທາລະນະສຸກເມືອງນອງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ ທັງນີ້, ກໍເພື່ອນຳໄປຮັບໃຊ້ເຂົ້າໃນວຽກງານສາທາລະນະສຸກເມືອງໃຫ້ເກີດຜົນປະໂຫຍດສູງສຸດ.

(ນັກຂ່າວ ສພຂ ສະຫວັນນະເຂດ)




# ບົດບາດຂອງສື່ມວນຊົນ

ໂດຍ: ດອກຫຍ້າ

ສື່ມວນຊົນ ເປັນຜູ້ປະຕິບັດໜ້າທີ່ເປັນສື່ກາງໃນການເກັບກຳ ແລະ ສະໜອງຂໍ້ມູນຂ່າວສານ ລະຫວ່າງປະຊາຊົນກັບປະຊາຊົນ ແລະ ສະໜອງຂໍ້ມູນລະຫວ່າງປະຊາຊົນ ກັບອົງການນຳຂອງປະເທດ.

ສື່ມວນຊົນມີບົດບາດພົວພັນທົ່ວສັງຄົມ ເພາະເປັນອົງການໜຶ່ງທີ່ເຮັດວຽກດ້ານການເມືອງ-ແນວຄິດ ເຊິ່ງເປັນວຽກງານໂຄງບົນຂອງສັງຄົມ ໂດຍເຮັດວຽກນຳພາແນວຄິດ, ນຳພາທາງສຽງຂອງສັງຄົມ ໄປຕາມທິດທາງຂອງການນຳພາສູງສຸດຂອງປະເທດ ແລະ ສາມາດຊວນເຊື່ອສັງຄົມໃຫ້ເຂົ້າໃຈ ແລະ ປະຕິບັດຕາມ; ສະນັ້ນ, ຝ່າຍຕາເວັນຕົກ ຈຶ່ງເຄີຍຂະໜານນາມໃຫ້ສື່ມວນຊົນວ່າ "ເປັນອຳນາດທີສີ່" (ບໍລິຫານ, ນິຕິບັນຍັດ, ຕຸລາການ ແລະ ສື່ມວນຊົນ)

ສື່ມວນຊົນ ມີບົດບາດເປັນອາວຸດແຫລມຄົມຂອງພັກ-ລັດ ໃນການໂຄສະນາເຜີຍແຜ່ແນວທາງ, ແຜນນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ໃນການສຶກສາອົບຮົມທາງດ້ານການເມືອງແນວຄິດແກ່ສັງຄົມ, ປຸກລະດົມມະຫາຊົນເຂົ້າຮ່ວມໃນການຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດ ຄື ປົກປັກຮັກສາ ແລະ ສ້າງສາປະເທດຊາດ, ພັດທະນາເສດຖະກິດ-ສັງຄົມ ຕາມແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫລາຍຫລັກການຂອງພັກ, ສືບຕໍ່ກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ, ສ້າງປະຖົມປັດໄຈໃຫ້ແກ່ການກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ; ເປັນເວທີໃນການສະແດງຄວາມຄິດເຫັນ, ການສະແດງທັດສະນະແບບສ້າງສັນຕໍ່ບັນຫາຕ່າງໆ; ເປັນສາຍໃຍຜູກພັນ ລະຫວ່າງມະຫາຊົນກັບພັກ-ລັດ; ເປັນພາກສ່ວນສຳຄັນໃນການແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ແລະ ການຕອບຕ້ານຖ້ອຍທຳນອງໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງກຸ່ມຄົນບໍ່ດີຕໍ່ຊາດ; ເປັນເວທີແຫ່ງການບັນເທີງ ແລະ ໃຫ້ຄວາມຮູ້ທີ່ເປັນປະໂຫຍດແກ່ສັງຄົມຢ່າງກວ້າງຂວາງ.



ພ້ອມນັ້ນ, ຍັງມີບົດບາດໃນການຕອບສະໜອງຂໍ້ມູນ-ຂ່າວສານແກ່ສັງຄົມ ເພື່ອເປັນການປຸກລະດົມສັງຄົມ ໃຫ້ປະຊາຊົນມີຄວາມຮັບຮູ້, ເຂົ້າໃຈ, ຂະຫຍັນຂັນແຂງ ແລະ ກະຕືລືລົ້ນ ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດຢ່າງເປັນຂະບວນການ ແລະ ເປັນເອກະພາບໃນທົ່ວປະເທດ; ບົດບາດໃນການພັດທະນາຄວາມຮູ້ຄວາມສາມາດໃຫ້ປະຊາຊົນ, ສ້າງທັດສະນະຄະຕິທີ່ດີໃນການພັດທະນາສັງຄົມ, ສ່ອງແສງຄວາມເປັນຈິງໃນສັງຄົມ ເພື່ອຮັກສາສິ່ງທີ່ດີ ແລະ ກຳຈັດສິ່ງທີ່ບໍ່ດີ; ບົດບາດໃນການຕຳນິວິຈານສັງຄົມ ທັງເປັນເວທີສະແດງຄວາມຄິດຄວາມເຫັນ ແລະ ໃຫ້ຄວາມບັນເທີງແກ່ມະຫາຊົນ.

ຄັດຈາກປຶ້ມຄູ່ມືນັກຂ່າວວິຊາສື່ສິ່ງພິມ (ສຳລັບການຮຽນ-ການສອນ).




# ຈາລຶກລັດຖະທຳມະນູນ

# ໂດຍ: ເພັດນາລີ ກ້ອນພັນທະວົງ

◆ 31 ປີເອກອ້າງ ບານເບັ່ງຜົນງານ
ເປັນຕຳນານກົດໝາຍ ຊ່າລືໄກກ້ອງ
ບົ່ງບອກລາວມີໃຊ້ ກົດໝາຍຂອງຊາດ
ປະກາດໃຫ້ໂລກຮູ້ ລາວກ້າວພັດທະນາ

◆15 ສິງຫາຈາລຶກໄວ້ ວັນລັດຖະທຳມະນູນ
ວັນເດືອນປີວຽນໝູນ ຂວບ 31 ປີໄດ້
1991 ມີໄວ້ ຝັງໃນປະຫວັດສາດ
ຫລາຍຊາດໄດ້ຮັບຮູ້ ລາວໝັ້ນແກ່ນທະນົງ

◆ລັດຖະທຳມະນູນບົ່ງບອກແຈ້ງ ເປັນແມ່ແບບການເມືອງ
ຄວາມຮຸ່ງເຮືອງສີວິໄລ ເສດຖະກິດ-ສັງຄົມກ້າວ
ຍ້ອນລາວມີກົດໝາຍໃຊ້ ເປັນມໍລະດົກສູງຄ່າ
ສິດ-ພັນທະພົນລະເມືອງພຽບພ້ອມ ລາວໝັ້ນແກ່ນທະນົງ

◆ຍ້ອນວ່າມີພັກຊີ້ ເຍືອງສ່ອງນຳພາ
ຊາວປະຊາມີສຸກ ເບີກບານຫົວຍິ້ມ
ຍຸທ່າງປິວແປງສ້າງ ຕາມແນວທາງໃສສ່ອງ
ປວງປະຊາພີ່ນ້ອງ ລາວກ້າວໄຕ່ຕາມ

◆ຂໍຈົດຈຳຍົກຍ້ອງ ບຸນຄຸນພັກນຳພາ
ນິອາດລາໄລລືມ ຂີດໝາຍຈະເລີນກ້າວ
ລາວມີລັດຖະທຳມະນູນໃຊ້ ຈຶ່ງສົດໃສເຮືອງຮຸ່ງ
ເດີນດຸ່ງໄປສູ່ເບື້ອງ ຈະເລີນກ້າວພັດທະນາ ຊອບແລ້ວ!



## ສຸກສະບາຍຫາຍໂຣຄາ

# ອັນຕະລາຍຈາກພລາສະຕິກອ່ອນ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ

ໃນຖົງຢາງພລາສະຕິກອ່ອນທຸກຊະນິດ ທີ່ໃຊ້ຫໍ່ຫຸ້ມອາຫານ, ບັດເອທີເອັມ, ຜ້າມ່ານໃນຫ້ອງນ້ຳ ແລະ ອື່ນໆ ມີສານເຄມີທີ່ເອີ້ນວ່າ: ພາທາເລດ (phthalate) ທີ່ຊ່ວຍເພີ່ມຄວາມອ່ອນຂອງວັດຖຸ ເຊິ່ງຖ້າໄດ້ຮັບສານນີ້ເຂົ້າໄປຫລາຍ ຈະເຮັດໃຫ້ມີຄວາມສ່ຽງຕໍ່ຄວາມດັນເລືອດສູງ ໂດຍໄດ້ຮັບການຢືນຢັນການຄົ້ນຄວ້າຈາກສະຖາບັນ Pediatrics ເຊິ່ງໄດ້ເກັບຜົນການທົດສອບຈາກກຸ່ມຕົວຢ່າງ ຈາກເດັກນ້ອຍອາຍຸ 6-19 ປີ ແລະ ພົບວ່າເດັກນ້ອຍທີ່ໄດ້ຮັບສານເຄມີພາທາເລດ ຈະມີຄວາມດັນເລືອດສູງກວ່າເດັກນ້ອຍທີ່ບໍ່ໄດ້ຮັບສານເຄມີນີ້.

ຟັງເບິ່ງຄືວ່າບໍ່ອັນຕະລາຍຫລາຍ ແຕ່ຕົວຈິງແລ້ວມັນເປັນອັນຕະລາຍໃນໄລຍະຍາວ ສານເຄມີນີ້ເຮັດໃຫ້ຮ່າງກາຍເກີດພາວະຄວາມຕຶງຄຽດອັອກຊິເດຊັ່ນ (oxidative stress) ນັ້ນກໍຄື ການທີ່ຈຸລັງຖືກສານອະນຸມູນອິດສະຫລະທຳລາຍ ມັນເປັນສາເຫດແຫ່ງພະຍາດຄວາມເສື່ອມຊຳເຮື້ອຫລາຍກວ່າ 70 ຊະນິດ ເຊິ່ງລ້ວນເປັນພື້ນຖານຂອງການເກີດພະຍາດເສັ້ນເລືອດຫົວໃຈ, ມະເຮັງ, ເສັ້ນເລືອດຕີບ, ຄໍ່ອັກເສບ ແລະ ການແຂງຕົວຂອງເນື້ອເຍື່ອແດງ. ພະຍາດຄວາມຈຳເສື່ອມ ແລະ ການເສື່ອມສະພາບສະເພາະ.

ນອກນັ້ນ, ພາທາເລດ ທີ່ຢູ່ໃນພລາສະຕິກຫໍ່ອາຫານ ຍັງຂັດຂວາງການເຮັດວຽກຂອງຕ່ອມຕ່າງໆໃນຮ່າງກາຍໂດຍສະເພາະຜູ້ທີ່ມີບັນຫາໂມເລກຸນໃນເລືອດຕ່ຳຢູ່ແລ້ວ ຍິ່ງຈະພາໃຫ້ເກີດຄວາມຜິດປົກກະຕິຂອງຮໍໂມນ ແລະ ເພີ່ມການເຕີບໂຕຂອງເດັກຍິງ ເຮັດໃຫ້ເຕີບໃຫຍ່ເກີນອາຍຸ ແລະ ຍັງມີສ່ວນເຮັດໃຫ້ເກີດພະຍາດເບົາຫວານ, ສະມາທິສັ້ນ, ພູມແພ້ ແລະ ຫອບຫືດ.

ດັ່ງນັ້ນ, ຖ້າສາມາດຫລີກເວັ້ນຈາກສານເຄມີນີ້ ໄດ້ຈະເປັນການດີທີ່ສຸດ ໂດຍຫລີກລ່ຽງການກິນອາຫານສຳເລັດຮູບ ຫລື ອາຫານທີ່ບັນຈຸ ຫລື ຫໍ່ຫຸ້ມດ້ວຍພລາສະຕິກ ແລະ ສຳຄັນທີ່ສຸດ ບໍ່ຄວນຫໍ່ອາຫານທີ່ຫໍ່ພລາສະຕິກ ແລ້ວນຳເຂົ້າໃນໄມໂຄເວັບ ຄວນຫັນມາເກັບຮັກສາອາຫານໃສ່ໃນໂຖແກ້ວຈະດີກວ່າ ເສຍສະຫລະຄວາມສະດວກສະບາຍເລັກນ້ອຍ ເພື່ອປ້ອງກັນພະຍາດ ແລະ ເພື່ອສຸຂະພາບທີ່ດີ.

www.sanook.com



# ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ຕິດຕາມການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານຂອງ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

2. ກະກຽມ ເນື້ອໃນ, ບັນທຶກ, ອອກແຈ້ງການ ແລະ ຮ່າງມະຕິຂອງກອງປະຊຸມລັດຖະບານ, ກອງປະຊຸມນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ ແລະ ກອງປະຊຸມອື່ນ ທີ່ ນາຍົກລັດຖະມົນຕີ ຫຼື ຮອງນາຍົກ ລັດຖະມົນຕີ ເປັນປະທານ;

3 ເກັບກຳ, ສັງລວມ ແລະ ສະເໜີທັດສະນະ ກ່ຽວກັບ ຂໍ້ມູນ ຂ່າວສານ ທັງພາຍໃນ ແລະ ຕ່າງ ປະເທດ ເພື່ອລາຍງານຂໍການຊີ້ນຳ ຫຼື ການຕົກລົງຈາກ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະ ມົນຕີ;

4. ຄົ້ນຄວ້າ, ວິເຄາະ, ວິໄຈ, ກວດກາ ກັ່ນຕອງ, ສັງລວມ ແລະສະເໜີຄວາມເຫັນ ກ່ຽວກັບບັນ ຫາສຳຄັນ ທີ່ຂະແໜງການ ແລະ ທ້ອງຖິ່ນ ສະເໜີຂຶ້ນມາ ແລ້ວລາຍງານຂໍຄຳເຫັນຊີ້ນຳ ຫຼື ຕົກລົງຈາກ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

5. ຄົ້ນຄວ້າ ສະເໜີຄຳເຫັນຕໍ່ ລັດຖະບານ ກ່ຽວກັບການກຳນົດ ນະໂຍບາຍ, ແຜນຍຸດທະສາດການພັດທະນາ ແລະ ກົນໄກການຄຸ້ມຄອງເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງ ປະເທດ, ການຄຸ້ມຄອງ, ການນຳໃຊ້ຊັບພະຍາກອນຂອງຊາດ ໃຫ້ມີຄຸນປະໂຫຍດສູງສຸດ ແລະ ປົກປັກຮັກສາສິ່ງແວດ ລ້ອມ ຕາມທິດຍືນຍົງ;

6. ເຂົ້າຮ່ວມກອງປະຊຸມລັດຖະບານ, ກອງປະຊຸມ ນາຍົກ-ຮອງນາຍົກລັດຖະມົນຕີ ແລະ ກອງປະຊຸມອື່ນ ທີ່ນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ ເປັນປະທານ;

7. ຈັດຕັ້ງກອງປະຊຸມ ຫຼື ເຂົ້າຮ່ວມກອງປະຊຸມກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ການຈັດຕັ້ງອື່ນ;

8. ສັງລວມ ຮ່າງ ກົດໝາຍ, ລັດຖະບັນຍັດ, ດຳລັດ ແລະ ຫົວຂໍ້ເອກະສານຕ່າງໆ ເພື່ອເອົາເຂົ້າໃນວາລະກອງປະຊຸມລັດຖະບານ, ກອງປະຊຸມນາຍົກ-ຮອງນາຍົກ ລັດຖະມົນຕີ ເພື່ອສະເໜີ ນາຍົກລັດຖະມົນຕີ ພິຈາລະນາ;

9. ເຂົ້າຮ່ວມ ຄົ້ນຄວ້າ, ຕິດຕາມ, ຊຸກຍູ້ ການສ້າງ ແລະ ປັບປຸງນິຕິກຳຂອງກະຊວງ, ອົງການລັດທຽບເທົ່າກະຊວງ;

10. ເປັນຄະນະປ້ອງກັນຮ່າງກົດໝາຍ ທີ່ລັດຖະບານ ໄດ້ສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອນຳເຂົ້າພິຈາລະນາ ໃນກອງປະຊຸມສະພາແຫ່ງຊາດ;

11. ລາຍງານ ສະພາບການ ແລະ ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ລັດຖະບານ ໂດຍມີການປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

12. ຈັດຕັ້ງ, ກະກຽມ ແລະ ເຂົ້າຮ່ວມກອງປະຊຸມພົບປະ, ພິທີຕ້ອນຮັບ ຫຼື ພິທີສົ່ງຄະນະຜູ້ແທນ, ບຸກຄົນສຳຄັນ ທີ່ເປັນແຂກ ຂອງລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

13. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ມະຕິ, ດຳລັດຂອງລັດຖະບານ; ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ຄຳເຫັນຊີ້ນຳ ຂອງນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ ພ້ອມທັງສັງລວມລາຍງານ ຕໍ່ລັດຖະບານ ໃນແຕ່ລະໄລຍະ;

14. ຄົ້ນຄວ້າ ແລະ ສະເໜີ ລັດຖະບານ ພິຈາລະນາ ຄຳຮ້ອງ ກ່ຽວກັບການ ຂໍເອົາສັນຊາດ, ຖອນສັນຊາດ, ປະສັນຊາດ, ໃຫ້ສັນຊາດລາວຄືນ ແລະ ເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;

15. ຄົ້ນຄວ້າ ແລະ ສະເໜີ ລັດຖະບານ ພິຈາລະນາ ໃຫ້ຄົນຕ່າງປະເທດເປັນພົນລະເມືອງກິດຕິມະສັກ;

16. ໃຫ້ການບໍລິການຮັບໃຊ້ປະຊາຊົນ, ຮັບຟັງ ຄຳຄິດ ຄຳເຫັນ, ຄຳຮ້ອງ, ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບບັນຫາທີ່ຢູ່ໃນຄວາມຮັບຜິດຊອບຂອງ ຕົນ, ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ເພື່ອຄົ້ນຄວ້າ, ແກ້ໄຂ ຫຼື ສະເໜີໃຫ້ຂັ້ນເທິງ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ;

17. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃນການເຄື່ອນໄຫວວຽກງານໃຫ້ແກ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

18. ຄຸ້ມຄອງພະນັກງານ-ລັດຖະກອນ ທີ່ສັງກັດ ຢູ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເຊັ່ນ ແຕ່ງຕັ້ງ, ຍົກຍ້າຍ, ຍ້ອງຍໍ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕາມກົດໝາຍ ແລະ ລະບຽບການ;

19. ຄຸ້ມຄອງ, ນຳໃຊ້ງົບປະມານ, ປະກອບພາຫະນະ ແລະ ອຸປະກອນຮັບໃຊ້ ຕາມກົດໝາຍ ແລະ ລະບຽບການ;

20. ພົວພັນ, ປະສານສົມທົບກັບ ຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານປະທານປະເທດ, ຄະນະເລຂາທິການສະພາແຫ່ງຊາດ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງ ແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອເປັນເອກະພາບໃນການບໍລິຫານ, ຄຸ້ມຄອງວຽກງານລວມ ຂອງລັດຖະບານ;

21. ພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການມອບໝາຍ ຂອງລັດຖະບານ;

22. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງ ການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ12ຂອງກົດໝາຍສະບັບນີ້;

2. ຊີ້ນຳ, ກວດກາ ແລະ ວາງມາດຕະການອັນຈຳເປັນ ກ່ຽວກັບການສ້າງ ແລະ ການຈັດຕັ້ງປະຕິບັດແຜນການວຽກງານ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;

3. ສະເໜີ ສ້າງ ຫຼື ປັບປຸງ ກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ ແລະ ດຳລັດ ຕໍ່ລັດຖະບານ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ໜັງສືທາງລັດຖະການ;

5. ໂຈະ, ຍົກເລີກ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ໜັງສືທາງລັດຖະການ ຂອງອົງການຈັດຕັ້ງຂັ້ນລຸ່ມຂອງຕົນ ແລະສະເໜີປັບປຸງ ຫຼື ຍົກເລີກ ນິຕິກຳ ຂອງຂະແໜງການອື່ນ ຫຼື ຂອງແຂວງ, ນະຄອນຫຼວງ ທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຫົວໜ້າອົງການລັດທຽບເທົ່າພະແນກ; ບັນຈຸ, ສັບຊ້ອນພະນັກງານວິຊາການພາຍໃນຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;

7. ຕິດຕາມ ກວດກາ, ສະຫຼຸບ, ສັງລວມ ແລະ ລາຍງານ ສະພາບການຈັດຕັ້ງວຽກງານ ຕໍ່ ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;

8. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ ຂອງນາຍົກລັດຖະ ມົນຕີ ຫຼື ຮອງນາຍົກລັດຖະມົນຕີ.

**ມາດຕາ 14 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

- ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ຕາມການແບ່ງງານ ແລະ ການມອບໝາຍ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

- ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕິດຂັດ ຕາມການມອບໝາຍ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

- ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົລັດຖະມົນຕີ ມີສິດລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ.

ອ່ານຕໍ່ສະບັບໜ້າ...




## ຮູ້ທັນຄວາມທຸກ

ໂດຍ: ຄົນເດີມ

ທຸກທ່ານ ທີ່ກຳລັງອ່ານໜັງສືພິມຢູ່ນີ້ ເຄີຍມີຄວາມທຸກບໍ່? ຜູ້ໃດບໍ່ມີຄວາມທຸກແດ່, ຄົນເຮົາຕ່າງກໍມີຄວາມທຸກກັນທັງນັ້ນ, ຄົນຮັ່ງມີກໍທຸກແບບຄົນຮັ່ງມີ, ຄົນທຸກຍາກກໍທຸກແບບຄົນທຸກຍາກ, ທຸກຄົນມີຄວາມທຸກເຊັ່ນດຽວກັນໝົດ, ຈະທຸກຍ້ອນເລື່ອງຫຍັງນັ້ນ ກໍເປັນເລື່ອງສະເພາະບຸກຄົນ, ເຮົາແຕ່ລະຄົນກໍຕ່າງມີຄວາມທຸກເປັນສ່ວນຕົວ.

ອີກໍຣ໌ ນາຣິຊ ນັກຕະຫລົກຜູ້ທີ່ມີຊື່ສຽງຊາວລັດເຊຍ, ມີຄົນຫລວງຫລາຍທີ່ນິຍົມຊົມຊອບລາວ, ຜູ້ຊົມຕ່າງກໍເຫັນວ່າຄົນແບບນີ້ ບໍ່ໜ້າຈະມີຄວາມທຸກ, ແຕ່ທີ່ແທ້ຈິງ ຮູ້ບໍ່ວ່າ ອີກໍຣ໌ ທຸກແທ້ທຸກວ່າ, ແມ່ນແຕ່ເວລາທີ່ລາວຢູ່ຕໍ່ໜ້າຝູງຊົນລາວເຮັດໃຫ້ທຸກຄົນມີອາລົມຂົບຂັນມ່ວນຊື່ນລ່າເລີງ ແລະ ມີຄວາມສຸກ; ສະຫລຸບລວມແລ້ວ ຊີວິດຂອງລາວມີຄວາມສຸກທີ່ເປັນສ່ວນລວມ ແຕ່ມີຄວາມທຸກທີ່ເປັນສ່ວນຕົວ, ເວລາລາວຢືນສະແດງຢູ່ເທິງເວທີ, ລາວເຮັດໃຫ້ຜູ້ຊົມທັງໝົດມີຄວາມສຸກ ແຕ່ເວລາລາວຢູ່ເຮືອນລາວມີຄວາມທຸກເປັນສ່ວນຕົວ, ບໍ່ມີຜູ້ໃດສາມາດແບ່ງເບົາຄວາມທຸກກັບລາວໄດ້; ອີກໍຣ໌ ເຄີຍໃຫ້ສຳພາດວ່າ: ຖ້າເປັນໄປໄດ້ຂ້ອຍຢາກຈະນອນຢູ່ເທິງເວທີນີ້ຊ້ຳ, ເພາະຂ້ອຍຮູ້ວ່າ: ຢູ່ບ່ອນຫັ້ນມີຄວາມສຸກທີ່ສຸດ, ແຕ່ເມື່ອເວລາຂ້ອຍກັບເມືອຢູ່ເຮືອນ, ຂ້ອຍແນມຫາເບິ່ງຄົນທີ່ຮັກຂ້ອຍແທ້ໆ ບໍ່ມີເລີຍ. ຜູ້ອຳນວຍການຈັກຄົນແລ້ວ, ບໍລິສັດໂຄສະນາຈັກບໍລິສັດແລ້ວ ທີ່ເຂົ້າມາຫາລາວຍ້ອນຫວັງຢາກຈະໄດ້ຜົນປະໂຫຍດ, ບໍ່ມີຜູ້ໃດຈັກຄົນທີ່ຮັກລາວດ້ວຍຄວາມຈິງໃຈ.

ລອງຄິດເບິ່ງດູວ່າ: ຄົນທີ່ມີຊື່ສຽງໂດ່ງດັງຂະໜາດນີ້, ເປັນຫຍັງຈຶ່ງມີຄວາມທຸກຫລາຍປານນີ້, ສະແດງໃຫ້ເຫັນວ່າທຸກຄົນກໍຕ່າງມີຄວາມທຸກດ້ວຍກັນທັງນັ້ນ.

ແຕ່ຄວາມທຸກຂອງຄົນເຮົາທັງຫລາຍຍັງບໍ່ເປັນອະລິຍະ ຕາບໃດທີ່ເຮົາຍັງເບິ່ງບໍ່ເຫັນຄວາມທຸກ, ຄົນຈຳນວນຫລາຍມັກບໍ່ຄ່ອຍເຫັນຄວາມທຸກ, ເພາະມົວເມົາແຕ່ເປັນທຸກ, ຄວາມທຸກຈົນສິລົ້ມສິຕາຍ ແຕ່ບໍ່ເຫັນຄວາມທຸກ. ມະນຸດແຕ່ລະຄົນຕ່າງກໍມີຄວາມທຸກກັນທັງນັ້ນ, ແຕ່ລະຄົນແນມເບິ່ງເຫັນສີໜ້າຍິ້ມໆຫົວໆ, ແຕ່ເບື້ອງຫລັງອາດມີຄວາມທຸກແອບແຝງຢູ່, ແຕ່ລະຄົນມີຄວາມທຸກເປັນຂອງຕົນເອງ, ຖ້າບໍ່ທຸກຍ້ອນຕົນເອງ, ກໍມີທຸກຍ້ອນຄົນອ້ອມຂ້າງ ຫລື ບັນຫາຕ່າງໆນາໆ ຕົວຢ່າງ: ບັນຫາວິກິດການທາງເສດຖະກິດ, ໄພເງິນເຟີ້, ຄ່າຄອງຊີບຂຶ້ນສູງ, ນ້ຳມັນຂາດຕະຫລາດ ແລະ ບັນຫາອື່ນໆທີ່ທັບຖົມເຂົ້າມາຢ່າງຫລວງຫລາຍ.

ມີພະນັກງານຍິງຄົນໜຶ່ງ (ຂໍສະຫງວນຊື່) ບອກວ່າມີຄວາມທຸກຫລາຍ, ທຸກຍ້ອນຫຍັງ, ຍ້ອນຄວາມຢາກຮ້າຍບໍ່ໄດ້ດັ່ງໃຈ, ຍາມໃດຢາກຮ້າຍຂຶ້ນມາລາວພະຍາຍາມລະງັບໃຫ້ໄດ້ແບບທັນທີທັນໃດໂລດ; ແຕ່ເປັນຫຍັງລາວເຮັດບໍ່ໄດ້, ລາວຈຶ່ງຮູ້ສຶກເຈັບອົກເຈັບໃຈຫລາຍ.

ແຕ່ເມື່ອໃດທີ່ໃຈຮ້ອນຂຶ້ນມາ ລາວພະຍາຍາມດັບຄວາມຮ້ອນໃຫ້ເຊົາໃນບຶດໜຶ່ງຄາວດຽວແຕ່ມັນບໍ່ໄດ້ຜົນ......

ແພດຈິດຕະສາດໄດ້ແນະນຳລາວວ່າ: "ອາການແບບນີ້, ເຈົ້າບໍ່ມີຄວາມສຸກຍ້ອນຢາກຮ້າຍດອກ, ເຈົ້າມີຄວາມທຸກເພາະຢາກກຳຈັດຄວາມຢາກຮ້າຍ, ຄວາມຢາກຮ້າຍບໍ່ຊໍ່ໜ້າຢ້ານກົວຫຍັງດອກ, ແຕ່ສິ່ງທີ່ໜ້າຢ້ານກົວສຳລັບເຈົ້າຄືຄວາມຢາກກຳຈັດກັບຄວາມຢາກຮ້າຍໃຫ້ໄດ້ດັ່ງໃຈຕ່າງຫາກ ພໍບໍ່ໄດ້ດັ່ງໃຈເຈົ້າກໍເລີຍຢາກຮ້າຍຊ້ຳອີກຕຳຫນຶ່ງ, ຈຶ່ງເກີດໃຈຮ້າຍອີກສອງຕໍ່".

ສາເຫດທີ່ເຮັດໃຫ້ລາວຮູ້ສຶກທຸກໜັກທຸກໜາ ເພາະຄິດວ່າເປັນຫຍັງຕົນເອງຈຶ່ງບໍ່ສາມາດລະງັບຄວາມໃຈຮ້ອນໄດ້, ແຕ່ເປັນຫຍັງເມື່ອຄວາມໃຈຮ້ອນເກີດຂຶ້ນແລ້ວຈຶ່ງລະງັບບໍ່ໄດ້.

ແພດຈິດຕະສາດບອກວ່າ: ມີເຄັດລັບງ່າຍໆໜ້ອຍດຽວ, ເຈົ້າບໍ່ຕ້ອງພະຍາຍາມລະງັບຄວາມຢາກຮ້າຍດອກ, ຄວາມຢາກຮ້າຍເກີດຂຶ້ນຍາມໃດ?

- ຍາມເຊົ້າ

- ຍາມເຊົ້າເປັນອະດີດ ຫລື ປັດຈຸບັນ?

ເຫັນບໍ່, ເຈົ້າຢູ່ໃນອະດີດ, ຍາມເຊົ້ານັ້ນລ່ວງເລີຍມາຈົນຮອດຕອນບ່າຍແລງພີ້ແລ້ວ ເຈົ້າຄວນຢູ່ກັບປັດຈຸບັນບໍ່ຄວນໄປຄິດເຖິງມັນອີກ.

ຄວາມຢາກຮ້າຍຢູ່ໃສ? ມັນບໍ່ເຄີຍຢູ່ໃສດອກ, ເຮົາຄິດເຖິງມັນເອງ, ຄົນສ່ວນໃຫຍ່ທີ່ມີຄວາມທຸກນັ້ນ, ເປັນຍ້ອນຄວາມທຸກເກີດຂຶ້ນແລ້ວກໍດັບໄປ, ແຕ່ຄົນເຮົາຍັງໂອບກອດເອົາມັນໄວ້ໃນໂລກຄວາມຄິດ. ຄັນມີຄົນມາເວົ້າໃສ່ຮ້າຍເຮົາ, ລາວໄດ້ຍ່າງຜ່າຍໜີໄປແລ້ວ, ແຕ່ເຮົາພັດຍັງເກັບເອົາມາຄິດຕໍ່, "ມັນແມ່ນໃຜ, ມາຈາກໃສຈຶ່ງມາເວົ້າໃສ່ຮ້າຍຂ້ອຍ" ຄວາມຄິດກໍເຂົ້າມາປັ່ນຫົວເຮົາໄປເລື້ອຍໆ, ເຊົາຕະປູມາຕອກໃສ່ເຮົາພຽງເທື່ອດຽວແລ້ວກໍ່ຍ່າງໜີ, ຕົວເຮົາເອງກັບຕອກຕະປູຊ້ຳເຕີມເຂົ້າໄປອີກບໍ່ຮູ້ວ່າຈັກດອກ.

ນີ້ແຫລະຄືຄວາມທຸກ ເພາະບໍ່ເຫັນຄວາມທຸກ, ເວລາເຮົາມີຄວາມທຸກເຮົາຈະເບິ່ງບໍ່ເຫັນຄວາມທຸກ, ຄົນອື່ນເຮັດໃຫ້ເຮົາມີຄວາມທຸກພຽງແຕ່ຄັ້ງດຽວ, ຫລັງຈາກນັ້ນ ເຮົາກໍຊ້ຳເຕີມຄວາມທຸກໃຫ້ກັບຕົວເອງສະເໝີ.




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພົມມະເສລີ**

11. ຜູ້ຖືກສົງໄສ ໝາຍເຖິງ ບຸກຄົນທີ່ສົງໄສວ່າເປັນຜູ້ກະທຳຜິດທາງອາຍາ ແຕ່ຍັງບໍ່ທັນມີຄຳສັ່ງເປີດການສືບສວນ-ສອບສວນ;

12. ຜູ້ຖືກຫາ ໝາຍເຖິງ ບຸກຄົນທີ່ຖືກນຳມາດຳເນີນຄະດີພາຍຫລັງມີຄຳສັ່ງເປີດການສືບສວນ-ສອບສວນ;




# ສະພາລາສະດອນອົດສະຕຣາລີ ຜ່ານຮ່າງກົດໝາຍຫລຸດຜ່ອນການປ່ອຍອາຍພິດ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**

ອີງຕາມການລາຍງານຂ່າວຂອງສຳນັກຂ່າວຊິນຫົວ ເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ ສະພາຜູ້ແທນລາສະດອນອົດສະຕຣາລີ ໄດ້ລົງຄະແນນສຽງເຫັນດີຕໍ່ຮ່າງກົດໝາຍວ່າດ້ວຍການປ່ຽນແປງສະພາບດິນຟ້າອາກາດ ຕາມລັດຖະບານ ໄດ້ຕົກລົງທີ່ຈະປັບປຸງບາງມາດຕາ.

ຮ່າງກົດໝາຍດັ່ງກ່າວ ຈະຮັບຮອງເອົາຄຳປະຕິຍານຂອງລັດຖະບານທີ່ຈະຫລຸດຜ່ອນການປ່ອຍອາຍພິດກາກບອນຈາກລະດັບຂອງປີ 2005 ລົງ 43% ໃນປີ 2030 ແລະການປ່ອຍມົນລະພິດສຸດທິໃຫ້ເປັນ 0 ໃນປີ 2050.

ການປັບປຸງກົດໝາຍສະບັບນີ້ ໄດ້ຢັ້ງຢືນວ່າເປົ້າໝາຍການຫລຸດຜ່ອນການປ່ອຍອາຍພິດຕໍ່າສຸດຂອງອົດສະຕຣາລີຈະຢູ່ທີ່ 43% ແລະ ນະໂຍບາຍການປ່ຽນແປງດິນຟ້າອາກາດຈະເປັນປະໂຫຍດຕໍ່ຊຸມຊົນໃນພາກພື້ນ.

ຮ່າງກົດໝາຍດັ່ງກ່າວ ຈະເຂົ້າສູ່ວຸດທິສະພາ ຄາດວ່າຈະໄດ້ຮັບການຮັບຮອງເປັນກົດໝາຍໃນເດືອນກັນຍາປີໜ້າ.

ທ່ານ ແອນໂທນີ ອັລບາເນຊີ ນາຍົກລັດຖະມົນຕີອົດສະຕຣາລີ ກ່າວວ່າ: ນີ້ແມ່ນການບັນລຸໄດ້ບັນດາຄຳໝັ້ນສັນຍາທີ່ສຳຄັນໃນການເລືອກຕັ້ງວ່າ ຈະຫລຸດຜ່ອນການປ່ອຍອາຍພິດ ແລະ ຂະແໜງພະລັງງານທົດແທນຈະຂະຫຍາຍຕົວເປັນ 82% ຂອງຕະຫລາດພະລັງງານຂອງປະເທດໃນປີ 2030.

ເຖິງຢ່າງໃດກໍຕາມ, ລັດຖະບານອົດສະຕຣາລີ ໄດ້ປະຕິເສດແຜນການຂອງພັກສີຂຽວ ທີ່ຕັ້ງເປົ້າໝາຍຈະຫລຸດການປ່ອຍອາຍພິດລົງເຖິງ 75% ໃນປີ 2030.

**ແຫລ່ງຂໍ້ມູນ: Xinhua**



# ລັດຖະສະພາຟີລິບປິນ ສະເໜີ ຮ່າງກົດໝາຍທີ່ເປັນປະໂຫຍດຕໍ່ຜູ້ທີ່ເປັນໂສດ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**



ຕາມການລາຍງານຂ່າວອາທິດຜ່ານມາ ໃຫ້ຮູ້ວ່າ: ທ່ານ ນາງ ມາຣກາຣິຕາ ອິນນາເຊຍ ໂນກຣາເລສ ສະມາຊິກສະພາໃນບັນຊີລາຍຊື່ ແລະ ຜູ້ນຳພັກ PBA ຂອງຟີລິບປິນ ໄດ້ສະເໜີຮ່າງກົດໝາຍເພື່ອສະໜອງໃຫ້ຄົນໂສດມີສິດທິພິເສດ ແລະ ສະຫວັດດີການຕ່າງໆ ສຳລັບປະຊາຊົນຟີລິບປິນທີ່ຍັງບໍ່ໄດ້ແຕ່ງງານ ເຊັ່ນ ທຶນການສຶກສາ, ເງິນອຸດໜູນປະຈຳເດືອນ, ໄດ້ສິດໃນການລາພັກເພີ່ມຂຶ້ນ ແລະ ຕາຕະລາງການເຮັດວຽກສາມາດປັບປ່ຽນໄດ້.

ທ່ານ ນາງ ມາຣກາຣິຕາ ອິນນາເຊຍ ໂນກຣາເລສ ໄດ້ນຳສະເໜີຮ່າງກົດໝາຍດັ່ງກ່າວໃນວັນທີ 6 ກໍລະກົດຜ່ານມາ ເຊິ່ງມີເນື້ອໃນຮຽກຮ້ອງໃຫ້ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງເລີ່ມພັດທະນາໂຄງການໃຫ້ບໍລິການຊ່ວຍເຫລືອຄົນໂສດ ແລະ ກຸ່ມຄົນທີ່ຍັງໂສດມີຄວາມຮັບຜິດຊອບ.

ຮ່າງກົດໝາຍສະບັບນີ້ ເປັນການປັບປຸງ ແລະ ເພີ່ມເຕີມກົດໝາຍວ່າດ້ວຍຄວາມສະຫວັດດີການຂອງພໍ່ ຫລື ແມ່ລ້ຽງດ່ຽວ ເຊິ່ງໃຫ້ນິຍາມ “ຄົນໂສດ” ຄືນໃໝ່ວ່າ: ເປັນຜູ້ທີ່ບໍ່ໄດ້ແຕ່ງງານຕາມກົດໝາຍ ຫລື ບຸກຄົນທີ່ຈົດທະບຽນສົມລົດແລ້ວ ແຕ່ການແຕ່ງງານນັ້ນເປັນໂມຄະ ລວມທັງຜູ້ທີ່ຢ່າຮ້າງຕາມກົດໝາຍຈາກຄູ່ສົມລົດ ແລະ ຜູ້ທີ່ຕ້ອງເບິ່ງແຍງ ຫລື ຈ່າຍຄ່າລ້ຽງດູໃຫ້ຄົນອື່ນນອກຈາກລູກຂອງຕົນເອງ.

ທ່ານ ນາງ ມາຣກາຣິຕາ ອິນນາເຊຍ ໂນກຣາເລສ ກ່າວວ່າ: ຄົນໂສດເຫລົ່ານີ້ ສົມຄວນໄດ້ຮັບຜົນປະໂຫຍດເພີ່ມເຕີມ ເພາະວ່າ ສ່ວນຫລາຍເຂົາເຈົ້າມີຄວາມຮັບຜິດຊອບຫາລ້ຽງຄອບຄົວ, ມີພໍ່ແມ່ລ້ຽງດ່ຽວຫລາຍຄົນໃນຟີລິບປິນທີ່ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍສ່ວນໃຫຍ່ຂອງຄອບຄົວ. ນອກນີ້, ຍັງມີກຸ່ມລູກກົກຂອງຄອບຄົວເຊິ່ງສ່ວນໃຫຍ່ຈະຕ້ອງເຮັດໜ້າທີ່ສົ່ງນ້ອງໆໄປຮຽນ ແລະ ຜູ້ທີ່ບໍ່ໄດ້ແຕ່ງງານຢູ່ໃນຄອບຄົວຂອງພວກເຂົາສ່ວນໃຫຍ່ຈະກາຍເປັນຜູ້ທີ່ຕ້ອງເບິ່ງພໍ່ແມ່ໃນຍາມເຖົ້າສະລາ ຫລື ຈຳເປັນຕ້ອງເບິ່ງແຍງຍາດພີ່ນ້ອງທີ່ບໍ່ສາມາດຊ່ວຍເຫລືອຕົວເອງໄດ້.

ຍິ່ງໄປກວ່ານັ້ນ, ຄົນໂສດຫລາຍຄົນໃນຟີລິບປິນຍັງຕ້ອງເປັນຄົນສົ່ງລູກຂອງອ້າຍເອື້ອຍນ້ອງຮຽນ ຫລືເຮັດໜ້າທີ່ເປັນເອື້ອຍລ້ຽງເພື່ອເບິ່ງແຍງລູກຂອງອ້າຍເອື້ອຍນ້ອງເມື່ອພໍ່ແມ່ຂອງເດັກນ້ອຍເຫລົ່ານີ້ຕ້ອງໄປຕ່າງປະເທດ ຫລືເມື່ອພໍ່ແມ່ຂອງເດັກບໍ່ສາມາດສົ່ງລູກຂອງຕົນເອງເຂົ້າຮຽນໄດ້.

ຮ່າງກົດໝາຍດັ່ງກ່າວ ຈະຄຸ້ມຄອງຄົນໂສດຊາວຟີລິບປິນທັງໝົດທີ່ມີບຸກຄົນອື່ນຢູ່ໃນການເບິ່ງແຍງ ເວັ້ນແຕ່ວ່າເຂົາເຈົ້າຈະໄດ້ຮັບການຄຸ້ມຄອງພາຍໃຕ້ກົດໝາຍສະບັບອື່ນ ເຊິ່ງໃຫ້ສິດທິປະໂຫຍດຫລາຍກວ່າຢູ່ແລ້ວ.

ຖ້າຮ່າງກົດໝາຍນີ້ ໄດ້ຮັບການອະນຸມັດຈາກສະພານິຕິບັນຍັດ ຄົນໂສດຟີລິບປິນຈະມີສິດໄດ້ຮັບທຶນການສຶກສາ, ຖ້າເປັນຜູ້ທີ່ໄດ້ຮັບຄ່າຈ້າງຕາມອັດຕາແຮງງານຂັ້ນຕໍ່າຈະໄດ້ຮັບເງິນອຸດໜູນປະຈຳເດືອນ 1.500 ເປໂຊ (ປະມານ 412.000 ກີບ) ແລະ ມີສິດເຮັດວຽກຢູ່ເຮືອນ ແລະ ກຳນົດຕາຕະລາງມື້ເຮັດວຽກທີ່ສາມາດປ່ຽນແປງໄດ້ ໂດຍທີ່ສິດທິປະໂຫຍດເຫລົ່ານີ້ຈະສິ້ນສຸດລົງ ຫລັງຈາກຄົນໂສດຈົດທະບຽນສົມລົດຕາມກົດໝາຍ.

**ແຫລ່ງຂ່າວ: Daily News**

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK













**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ